# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

26 ພຶດສະພາ-1 ມິຖຸນາ 2023

ປີທີ 12

ສະບັບທີ 924

ລາຍສັປະດາ


## ຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າຫຼາຍບັນຫາສຳຄັນຂອງປະເທດຊາດ

(ສພຊ) ປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ມະຕິວ່າດ້ວຍການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາແຫ່ງຊາດກ່ຽວກັບການດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ. ໃນລະຫວ່າງວັນທີ 25-26 ພຶດສະພາ 2023 ນີ້, ຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມປະຈຳເດືອນພຶດສະພາ 2023 ເພື່ອພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ. ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນ ພຶດສະພາ 2023 ໄດ້ດຳເນີນໂດຍການເປັນປະ



ທານນຳພາກອງປະຊຸມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ເຂົ້າຮ່ວມກອງປະຊຸມມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ແຂກທີ່ຖືກເຊີນຈາກພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນ ພຶດສະພາ 2023 ໄດ້ດຳເນີນໃນສະພາບເງື່ອນໄຂທີ່ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ບັນດາກົງຈັກເສນາທິການ ກຳລັງສຸມໃສ່ປະສານສົມທົບກັບບັນດາກະຊວງ, ອົງການ ໃນການກະກຽມຮ່າງກົດໝາຍ ແລະ ບັນດາເນື້ອໃນຂອງກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແນໃສ່ເຮັດໃຫ້ການກະກຽມເນື້ອໃນມີຄຸນນະພາບ ແລະ ສຳເລັດທັນເວລາ ເປັນບ່ອນອີງໃຫ້ແກ່ພາກສ່ວນກ່ຽວຂ້ອງ ໃນການແກ້ໄຂບັນຫາຕ່າງໆ ໃຫ້ມີປະສິດທິຜົນ.

ກອງປະຊຸມ, ໄດ້ຮັບຟັງການລາຍງານກ່ຽວກັບແຜນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX; ຮ່າງບົດລາຍງານຜົນການຕິດຕາມກວດກາ ຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດ

ອ່ານຕໍ່ໜ້າ 2

## ຂ່າວໜ້າໃນ




ປະທານກຳມາທິການ... (ໜ້າ 3)



ຄະນະຜູ້ແທນສະພາແຫ່ງຊາດ... (ໜ້າ 4)



ອາກຊັງຕິນ ກຽມຊຳລະຄ່າສິນຄ້າ... (ໜ້າ 11)


## ກອງປະຊຸມຄົບຄະນະກາງສະໄໝ ຄະນະບໍລິຫານງານພັກແຂວງໄຊຍະບູລີ ສະໄໝທີ VII

(ສພຊ) ກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກແຂວງໄຊຍະບູລີ ສະໄໝທີ VII ໄດ້ໄຂຂຶ້ນຢ່າງເປັນທາງການທີ່ຫ້ອງປະຊຸມໃຫຍ່ຂອງແຂວງໃນວັນທີ 17 ພຶດສະພາ 2023 ໂດຍການເປັນປະທານຂອງສະຫາຍພົງສະຫວັນ ສິດທະວົງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງໄຊຍະບູລີ; ໂດຍການເຂົ້າຮ່ວມ ແລະ ນຳພາຂອງສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໃນ



ນາມຜູ້ຊີ້ນຳແຂວງໄຊຍະບູລີ, ມີການນຳຈາກສູນກາງ, ບັນດາສະຫາຍໃນຄະນະບໍລິຫານງານພັກແຂວງ, ມີເລຂາຄະນະພັກຮາກຖານ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ອ່ານຕໍ່ໜ້າ 4

## ສຳເລັດການຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມ ຢູ່ ສປ ຈີນ

(ສພຊ) ໃນລະຫວ່າງວັນທີ 16-19 ພຶດສະພາ 2023, ຄະນະຜູ້ແທນຂອງພັກ ປປ ລາວ ນຳໂດຍສະຫາຍ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຢ້ຽມຢາມເຮັດວຽກ ແລະ ເຂົ້າຮ່ວມກອງປະຊຸມ "ໜຶ່ງແລວ ໜຶ່ງເສັ້ນທາງ ເພື່ອການພັດທະນາເຊື່ອມໂຍງທາງບົກ-ທາງທະເລ ປະຈຳປີ 2023" ຢູ່ນະຄອນສີງຊື້ງ ສປ ຈີນ ເຊິ່ງການຈັດກອງປະຊຸມຄັ້ງນີ້ ພໍດີເປັນໂອກາດຄົບຮອບ 10 ປີ ຂອງຂໍລິເລີ່ມ "ໜຶ່ງແລວໜຶ່ງເສັ້ນທາງ" ທີ່ປະທານປະເທດ ສີ



ຈິ້ນຜິງ ຂອງຈີນ ປະກາດອອກໃນປີ 2013 ຜ່ານມາ.

ໃນໂອກາດເຂົ້າຮ່ວມກອງປະຊຸມດັ່ງກ່າວ, ສະຫາຍ ນາງ ສູນທອນ ໄຊຍະຈັກ ໄດ້ກ່າວຄຳເຫັນໂດຍໄດ້ຍົກໃຫ້ເຫັນຄວາມໝາຍສຳຄັນຂອງຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ" ຕໍ່ ສປປລາວ ໂດຍສະເພາະແມ່ນການເຊື່ອມໂຍງຍຸດທະສາດ

ອ່ານຕໍ່ໜ້າ 4

## ລະນຶກວິລະກຳແຫກຄຸກ ໂພນເຄັງ ຄົບຮອບ ... ຄ້ຳມະຫັດສະຈັນ

### ເພື່ອກໍ່ໃຫ້ໄດ້ບົດຮຽນອັນລ້ຳຄ່າ ຍົກສູງນ້ຳໃຈຮັກຊາດໃນທົ່ວປວງຊົນລາວ

ການແຫກຄຸກແບບລວມໝູ່ ຂອງບັນດາຜູ້ນຳພັກ ແລະ ແນວລາວຮັກຊາດ ຄັ້ງມະຫັດສະຈັນ, ໃນວັນທີ 24 ພຶດສະພາ 1960 ເປັນເຫດການປະຫວັດສາດ ເຊິ່ງບໍ່ເຄີຍມີມາກ່ອນໃນປະຫວັດສາດຂອງຊາດລາວເຮົາ ແລະ ຫາຍາກໃນໂລກ. ໃນນັ້ນ, ມີການເຄື່ອນໄຫວທີ່ສຳຄັນ ໃນການປະຕິບັດທິດການຕໍ່ສູ້ປະຕິວັດ ຢ່າງຖືກຕ້ອງສອດຄ່ອງກັບສະພາບການຕົວຈິງ ກາຍເປັນບົດຮຽນອັນລ້ຳຄ່າໂດຍສະເພາະການປຸກລະດົມຂົນຂວາຍ ປຸກລຸກຄວາມຕື່ນຕົວຮັກຊາດ ດຶງເອົານ້ຳໃຈຮັກຊາດຂອງບັນດາສາລະວັດທະຫານ ທີ່ແຕ່ກ່ອນແມ່ນກຳລັງຂອງຝ່າຍວຽງຈັນ ມາເປັນກຳລັງປະຕິວັດ ເປັນຜູ້ພາທາງຜູ້ນຳເຮົາອອກຈາກຄຸກຢ່າງປອດໄພ.

ພຶດຕິກຳຕົວຈິງ ໃນເຫດການປະຫວັດສາດ ວິລະກຳແຫກຄຸກໂພນເຄັງ ແມ່ນມີ

ອ່ານຕໍ່ໜ້າ 8

## ກຳມາທິການກົດໝາຍ ທາບທາມຄຳເຫັນໃສ່ຮ່າງກົດໝາຍ 4 ສະບັບ




(ສພຊ) ໃນວັນທີ 22 ພຶດສະພາ 2023 ທີ່ສະພາແຫ່ງຊາດ, ກຳມາທິການກົດໝາຍໄດ້ຈັດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 4 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ສຈ. ປອ.ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ; ມີບັນດາທ່ານປະທານ-

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບສະມາຊິກສະພາແຫ່ງຊາດ ສ.ເກົາຫຼີ



(ສພຊ) ວັນທີ 18 ພຶດສະພາ 2023 ທີ່ສະພາແຫ່ງຊາດ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ Suh

ອ່ານຕໍ່ໜ້າ 2

## ຄະນະປະຈຳ...

(ຕໍ່ຈາກໜ້າ 1)

ໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີທາງອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີທາງແພ່ງ; ການຄົ້ນຄວ້າການສະເໜີແຕ່ງຕັ້ງຜູ້ພິພາກສາຂອງສານປະຊາຊົນທ້ອງຖິ່ນ; ລາຍງານຜົນຂອງການຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປົກຄອງສັງຄົມແຫ່ງຊາດ; ລາຍງານກ່ຽວກັບການມອບຫຼຽນລາງວັນດີເດັ່ນ ໃນການອອກກົດໝາຍ ແລະ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄຸ້ມຄອງຢາສູບຈາກອົງການອະນາໄມໂລກ; ລາຍງານຜົນການຕິດຕາມກວດກາຂອງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ກ່ຽວກັບການສຳປະທານທີ່



ດິນປ່າໄມ້ ເພື່ອພັດທະນາກະສິກຳ, ຟື້ນຟູປ່າ ແລະ ປູກໄມ້ທົດແທນຄືນເຂດພັດທະນາໂຄງການຢູ່ແຂວງອັດຕະປື; ລາຍງານຜົນການຕິດຕາມກວດກາ, ຊຸກຍູ້ການຜະລິດເປັນສິນຄ້າທົດແທນການນຳເຂົ້າ ແລະ ການຄຸ້ມຄອງລາຄາສິນຄ້າ; ລາຍງານກ່ຽວກັບຄວາມຄືບໜ້າການຊຳລະໜີ້ຕ່າງປະເທດປີ 2023; ລາຍງານຜົນການທາບທາມຄຳເຫັນກົດໝາຍ 12 ສະບັບ ໂດຍສະເພາະ 4 ກົດໝາຍ ທີ່ມີຄວາມລະອຽດອ່ອນ; ລາຍງານຜົນການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ ຈຳນວນ 10 ສະບັບ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX; ລາຍງານຜົນການເຂົ້າຮ່ວມກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ຜູ້ນຳໄອປາ ໃນລະຫວ່າງວັນທີ 9-10 ພຶດສະພາ 2023 ທີ່ລາບວນ ບາໂຈ ປະເທດອິນໂດເນເຊຍ ແລະ ການຂໍການພິຈາລະນາຄືນກ່ຽວກັບກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1.

ຈາກນັ້ນ, ກອງປະຊຸມໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ໃສ່ບັນດາບົດລາຍງານຕ່າງໆທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

(ສຸພາວັນ ຫອມສະນິດ)

## ຮອງປະທານ...

(ຕໍ່ຈາກໜ້າ 1)

Byung-soo ສະມາຊິກສະພາແຫ່ງຊາດ ສ.ເກົາຫຼີ, ຫົວໜ້າຄະນະກຳມະການພິເສດ ສະໜັບສະໜູນໃນການສະໝັກເປັນເຈົ້າພາບງານວາງສະແດງໂລກ 2030 ຂອງແຂວງບູຊານ.

ໃນໂອກາດດັ່ງກ່າວ, ທ່ານຮອງປະທານສະພາແຫ່ງຊາດໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຈິງໃຈຕໍ່ທ່ານ Suh Byung-soo ໃນການເຂົ້າຢ້ຽມຂໍ່ານັບຄັ້ງນີ້ ເພື່ອປຶກສາຫາລືກ່ຽວກັບການຊຸກຍູ້ ແລະ ສົ່ງເສີມສາຍພົວພັນມິດຕະພາບ ທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ສອງປະເທດ ລາວ-ສ.ເກົາຫຼີ ເຊິ່ງເປັນການເສີມຂະຫຍາຍສາຍພົວພັນຮ່ວມມື ຂອງສອງປະເທດ ສປປລາວ ແລະ ສ.ເກົາຫຼີ; ໃນຕະຫຼອດໄລຍະທີ່ຜ່ານມາ, ສອງປະເທດໄດ້ມີການພົວພັນຮ່ວມມືອັນດີງາມນຳກັນຢ່າງເປັນປົກກະຕິ; ພ້ອມນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ຕີລາຄາສູງການພົວພັນຮ່ວມມືຂອງສອງອົງການນິຕິບັນຍັດຂອງສອງປະເທດ ເຊິ່ງສະແດງອອກມີການແລກປ່ຽນການຢ້ຽມຢາມລະຫວ່າງຄະນະຜູ້ແທນຂັ້ນສູງຂອງສອງຝ່າຍຜ່ານມາ ຄື: ໃນປີ 2013 ທ່ານປະທານປະເທດແຫ່ງ ສປປລາວ ໄດ້ເດີນທາງຢ້ຽມຢາມ ສ.ເກົາຫຼີ ແລະ ໃນເດືອນກັນຍາ 2019 ທ່ານປະທານາທິບໍດີ ສ.ເກົາຫຼີ ໄດ້ເດີນ



ທາງມາຢ້ຽມຢາມລັດຖະກິດ ສປປລາວ. ໃນເດືອນມີນາ 2022 ທີ່ຜ່ານມາ ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວ ໄດ້ພົບປະກັບທ່ານ ປາກ ບຽວ ຊຶງ ປະທານສະພາແຫ່ງຊາດ ແຫ່ງ ສ. ເກົາຫຼີ ແບບທາງໄກ. ນອກຈາກນີ້, ຄະນະຜູ້ແທນ ສ.ເກົາຫຼີ ນຳໂດຍທ່ານຮອງປະທານສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີ ກໍໄດ້ມາຢ້ຽມຢາມລາວ ໃນທ້າຍປີ 2022. ພ້ອມກັນນີ້, ທ່ານຮອງປະທານສະພາແຫ່ງຊາດ ໄດ້ແຈ້ງສະພາບການປະຕິບັດພາລະບົດບາດ ແລະ ໜ້າທີ່ ຂອງສະມາຊິກສະພາແຫ່ງຊາດ ຊຸດທີ IX ໃຫ້ຄະນະຜູ້ແທນ ສ.ເກົາຫຼີ ແລະ ປຶກສາຫາລືການພົວພັນຮ່ວມມືລະຫວ່າງ ສອງອົງການນິຕິບັນຍັດ ໃນຕໍ່ໜ້າ ໂດຍຈະສືບຕໍ່ຊຸກຍູ້ ໃຫ້ສອງປະເທດ ກໍຄື 2 ສະພາແຫ່ງຊາດ, ສະໜັບສະໜູນການຮ່ວມມືກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເພື່ອປະກອບສ່ວນເຂົ້າໃນການພັດທະນາຮອບດ້ານໃນພາກພື້ນ ແລະ ສາກົນ.

ຈາກນັ້ນ, ທ່ານຫົວໜ້າຄະນະຜູ້ແທນສະພາແຫ່ງຊາດ ສ.ເກົາຫຼີ ໄດ້ກ່າວສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ທີ່ໄດ້ເສຍສະຫຼະເວລາອັນມີຄ່າໃຫ້ການຕ້ອນຮັບໃນຄັ້ງນີ້ ແລະ ເຫັນດີຕໍ່ຄຳຄິດຄຳເຫັນຂອງທ່ານຮອງປະທານສະພາແຫ່ງຊາດ ທີ່ໄດ້ກ່າວມາແລ້ວນັ້ນ, ທ່ານຍັງໄດ້ຢັ້ງຢືນວ່າຈະສືບຕໍ່ຮ່ວມມື ເປັນຕົ້ນດ້ານເສດຖະກິດ ລະຫວ່າງສອງປະເທດ ລາວ-ສ.ເກົາຫຼີ ແລະ ດ້ານອື່ນໆ ໃຫ້ມີການພັດທະນາຂຶ້ນໄປເລື້ອຍໆ ໃນຖານະເປັນສະມາຊິກສະພາແຫ່ງຊາດ ສ.ເກົາຫຼີ ເພື່ອເສີມຂະຫຍາຍສາຍພົວພັນສອງປະເທດ ກໍຄືສອງພັກ, ສອງລັດ ເວົ້າສະເພາະ ກໍຄືສອງອົງການນິຕິບັນຍັດໃຫ້ນັບມື້ນັບແໜ້ນແຟ້ນ ແລະ ເປັນຮູບປະທຳຫຼາຍຂຶ້ນກວ່າເກົ່າ; ພ້ອມດຽວກັນນັ້ນ, ທ່ານຫົວໜ້າຄະນະຜູ້ແທນສະພາແຫ່ງຊາດ ສ.ເກົາຫຼີ ໄດ້ແຈ້ງໃຫ້ຊາບ ສ.ເກົາຫຼີ ໄດ້ສະໝັກເປັນເຈົ້າພາບຈັດງານວາງສະແດງສິນຄ້າໂລກ ປີ 2030 ຂອງແຂວງບູຊານ ເຊິ່ງຈະຜ່ານການລົງຄະແນນໃນເດືອນພະຈິກ 2023 ນີ້ ເຊິ່ງສະເໜີໃຫ້ລາວຊ່ວຍສະໜັບສະໜູນການສະເໜີເປັນເຈົ້າພາບດັ່ງກ່າວ ແລະ ສະເໜີສະພາແຫ່ງຊາດລາວຊ່ວຍຊຸກຍູ້ນັກລົງທຶນຂອງ ສ.ເກົາຫຼີ ຢູ່ລາວ ໂດຍສະເພາະໂຄງການສ້າງຂະຫຍາຍສະໜາມບິນຫຼວງພະບາງ, ຈະເປັນໂຄງການທີ່ມີຄວາມໝາຍສຳຄັນ ມີເງື່ອນໄຂດຶງດູດນັກທ່ອງທ່ຽວຈາກຫຼາຍປະເທດມາທ່ອງທ່ຽວ ແລະ ຢ້ຽມຢາມຫຼວງພະບາງຕື່ມອີກ.

ຕໍ່ການສະເໜີຂອງຝ່າຍ ສ.ເກົາຫຼີ ທ່ານຮອງປະທານສະພາແຫ່ງຊາດ ເຫັນດີຈະຊຸກຍູ້ຕາມບົດບາດຂອງຕົນ ພ້ອມສະແດງຄວາມເຊື່ອໝັ້ນວ່າ ສ.ເກົາຫຼີ ຈະສາມາດເປັນເຈົ້າພາບທີ່ດີໄດ້ໃນງານວາງສະແດງໂລກດັ່ງກ່າວ ໃນປີ 2030; ໃນຕອນທ້າຍທ່ານຍັງໄດ້ສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອ ຂອງ ສ.ເກົາຫຼີ ໃນການກະກຽມເປັນເຈົ້າພາບ ASEAN ຂອງ ສປປລາວ.

## ເລື່ອງເດັ່ນຂ່າວເດັດ

*# ຄັດໂດຍ: ຫອມສະນິດ*

*❐ ປີ 2022 ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ອອກອະນຸຍາດການລົງທຶນທັງໝົດ 6.937 ຫົວໜ່ວຍ ມູນຄ່າການລົງທຶນ 120.961,72 ຕື້ກີບ (ຄາດຄະເນການນຳເຂົ້າທຶນປະມານ 18.872,63 ຕື້ກີບ)ປະຕິບັດໄດ້ລື່ນແຜນ 77,04% ຂອງແຜນການປີ (10.660 ຕືກີບ) ໃນນີ້ ກິດຈະການທົ່ວໄປ (ບໍ່ຄວບຄຸມ) 6.807 ຫົວໜ່ວຍ ມູນຄ່າ 114.446,73 ຕື້ກີບ (ສູນກາງອອກອະນຸຍາດ 2.526 ຫົວໜ່ວຍມູນຄ່າ 97.535,41 ຕື້ກີບ ທ້ອງຖິ່ນອອກອະນຸຍາດ 4.281 ຫົວໜ່ວຍ ມູນຄ່າ 16.911,32 ຕື້ກີບ) ກິດຈະການທົ່ວໄປ (ໃນບັນຊີຄວບຄຸມ) 84 ຫົວໜ່ວຍ ມູນຄ່າ 3.971,98 ຕື້ກີບ (ສູນກາງອອກອະນຸຍາດ 51 ຫົວໜ່ວຍ ມູນຄ່າ 743,11 ຕື້ກີບ ທ້ອງຖິ່ນອອກອະນຸຍາດ 33 ຫົວໜ່ວຍ ມູນຄ່າ 3.228,87 ຕື້ກີບ) ກິດຈະການສຳປະທານ 14 ຫົວໜ່ວຍ ມູນຄ່າ 1.686,08 ຕື້ກີບ (ສູນກາງອອກອະນຸຍາດ 4 ຫົວໜ່ວຍ ມູນຄ່າ 28,66 ຕື້ກີບ ທ້ອງຖິ່ນອອກອະນຸຍາດ 10 ຫົວໜ່ວຍ ມູນຄ່າ 1.657,42 ຕື້ກີບ) ການລົງທຶນໃນເຂດເສດຖະກິດພິເສດ 32 ຫົວໜ່ວຍ ມູນຄ່າ 856,91 ຕື້ກີບ.*

***ໜສພ. ວຽງຈັນໃໝ່ 18/05/2023***

*❐ ວຽກງານຕ້ານເຊື້ອເຮສໄອວີ (HIV) ແມ່ນໜຶ່ງໃນຍຸດທະສາດຂອງແຜນງານສາທາລະນະສຸກ ມີເປົ້າໝາຍໃນການຍຸດຕິການຕິດເຊື້ອ ໃນປີ 2030 ເຊິ່ງເປັນເປົ້າໝາຍຂອງທົ່ວໂລກ ທີ່ຕ້ອງໄດ້ຮ່ວມແຮງຮ່ວມໃຈສະກັດກັ້ນ ແລະ ຈັດຕັ້ງປະຕິບັດໃຫ້ບັນລຸເປົ້າໝາຍສາກົນ ກໍຄື ຂອງ ສປປລາວ ເພື່ອໃຫ້ບັນລຸ 95-95-95 ໃນປີ 2030 ໃນການປະເມີນແບບໄວໃນກຸ່ມຜູ້ໃຊ້ສານເສບຕິດ ແລະ ສັກຢາເສບຕິດ ທີ່ຕິດພັນວຽກງານການປ້ອງກັນ ແລະ ການເຂົ້າເຖິງກຸ່ມປະຊາກອນດັ່ງກ່າວ ເພື່ອໃຫ້ເຂົານຳມາວາງແຜນໃນຕໍ່ໜ້າ ເຊັ່ນ: ເຂົ້າເຖິງກຸ່ມດັ່ງກ່າວໂດຍການໃຫ້ຄວາມຮູ້ການປ້ອງກັນພະຍາດການບໍລິການ ການກວດກັ່ນຕອງຫາການຕິດເຊື້ອ HIV ແລະ ເຂົ້າຮັບບໍລິການການປິ່ນປົວ HIV ໃນສະຖານບໍລິການດ້ານສາທາລະນະສຸກ ຜ່ານການປະເມີນຫຼາຍກວ່າ 90% ຂອງຜູ້ໃຊ້ຢາເສບຕິດໃນປີໜຶ່ງ ແລະ ໃນມື້ໜຶ່ງ ຫຼືໃຊ້ເລື້ອຍໆ ສ່ວນໃຫຍ່ແມ່ນໃຊ້ຢາ ATS ໃນພື້ນທີ່ທົ່ວໄປທີ່ມີຢາເຮໂຣອີນ ໃນແຂວງພາກເໜືອ ແລະ ຢາໄອສ ໃນແຂວງສະຫວັນນະເຂດຫຼາຍກວ່າເຄິ່ງໜຶ່ງຂອງຜູ້ສັກຢາເສບຕິດເຂົ້າທາງເສັ້ນເລືອດ ໄດ້ສັກຫຼາຍກວ່າໜຶ່ງຄັ້ງຕໍ່ມື້; ນອກນີ້, ກຸ່ມຄົນທີ່ມີຄູ່ນອນຫຼາຍຄົນ ແລະ ກຸ່ມຊາຍມີເພດສຳພັນກັບຊາຍ ກໍເປັນສາເຫດໃຫ້ເກີດມີການຕິດເຊື້ອ HIV.*

***ໜສພ. ວຽງຈັນໃໝ່ 22/05/2023***

# ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພົບປະໂອ້ລົມພະນັກງານຫຼັກແຫຼ່ງຢູ່ກອງພົນທີ 2 ແລະ 3

(ສພຊ) ວັນທີ 16 ພຶດສະພາ 2023, ສະຫາຍ ພົນຕີ ວົງສັກ ພັນທະວົງ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມພົບປະໂອ້ລົມພະນັກງານຫຼັກແຫຼ່ງຢູ່ກອງພົນທີ 2 ໂດຍມີສະຫາຍ ພົນຈັດຕະວາ ວຽງແກ້ວ ສີສຸລາດ ເລຂາຄະນະພັກ ຫົວໜ້າການເມືອງກອງພົນທີ 2, ສະຫາຍ ພົນຈັດຕະວາ ຄຳດີ ໄຊຍະວົງ ຮອງເລຂາຄະນະພັກ ຫົວໜ້າການທະຫານກອງພົນທີ 2, ພ້ອມດ້ວຍພະນັກງານຫຼັກແຫຼ່ງ ທົ່ວກອງພົນທີ 2 ເຂົ້າຮ່ວມ.



ໂອກາດນີ້, ສະຫາຍ ພົນຈັດຕະວາ ຄຳດີ ໄຊຍະວົງ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາໂດຍຫຍໍ້, ຈາກນັ້ນ ສະຫາຍ ພົນຕີ ວົງສັກ ພັນທະວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານ ແລະ ຜົນສຳເລັດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ຄະນະພັກ-ຄະນະບັນຊາ, ພະນັກງານຫຼັກແຫຼ່ງກອງພົນທີ 2 ຍາດມາໄດ້ຕະຫຼອດໃນໄລຍະຜ່ານມາ ພ້ອມທັງໄດ້ຍົກໃຫ້ເຫັນພາລະບົດບາດ ຂອງສະພາແຫ່ງຊາດ ເວົ້າສະເພາະແມ່ນພາລະບົດບາດຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ພ້ອມທັງໄດ້ຮຽກຮ້ອງໃຫ້ຄະນະພັກ-ຄະນະບັນຊາແຕ່ລະຂັ້ນ ຍົກສູງນ້ຳໃຈຄວາມຮັບຜິດຊອບຂອງຕົນຕໍ່ໜ້າທີ່ການເມືອງທີ່ພັກ-ລັດຂັ້ນເທິງກໍຄືການຈັດຕັ້ງມອບໝາຍໃຫ້, ເປັນເຈົ້າການປະຕິບັດຄຳຂວັນຮັກຊາດ ແລະ ພັດທະນາ, ຕັ້ງໜ້າປັບປຸງ ກໍ່ສ້າງກຳລັງໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ, ປັບປຸງກໍ່ສ້າງກົມກອງ ຄ້າຍຄູໃຫ້ມີຄວາມແໜ້ນໜາຖາວອນ, ເປັນເຈົ້າການເຮັດໜ້າທີ່ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເຮັດໃຫ້ຂອບເຂດກົມກອງ ຮັບຜິດຊອບມີຄວາມສະຫງົບໂດຍພື້ນຖານ, ປະຊາຊົນມີທາງທຳມາຫາກິນ, ມີໂອກາດພັດທະນາເສດຖະກິດ-ສັງຄົມ, ຫັນລົງກໍ່ສ້າງຮາກຖານການເມືອງ ຕິດພັນກັບການປະຕິບັດ 2 ວາລະແຫ່ງຊາດ ຂອງລັດຖະບານ ເພື່ອຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຂອງສັງຄົມໃຫ້ນັບມື້ຫຼຸດໜ້ອຍຖອຍລົງ.

ໃນວັນທີ 17 ພຶດສະພາ, ສະຫາຍ ພົນຕີ ວົງສັກ ພັນທະວົງ ພ້ອມດ້ວຍຄະນະ ຍັງໄດ້ເຄື່ອນໄຫວຢ້ຽມຢາມ ແລະ ພົບປະໂອ້ລົມ ນາຍ ແລະ ພົນທະຫານ ກອງພົນທະຫານຮາບທີ 3 ໂດຍມີສະຫາຍ ພົນຈັດຕະວາ ໄຊຍະວົງ ໄຊນາມທິລາດ ເລຂາຄະນະພັກ, ຫົວໜ້າການທະຫານກອງພົນທີ 3, ມີຄະນະພັກ-ຄະນະບັນຊາກອງພົນ, ພະນັກງານຫຼັກແຫຼ່ງມາຈາກອົງການ ແລະ ກົມກອງ ເຂົ້າຮ່ວມ.

ໂອກາດດັ່ງກ່າວ, ສະຫາຍ ພົນຈັດຕະວາ ໄຊຍະວົງ ໄຊນາມທິລາດ ໄດ້ລາຍງານຫຍໍ້ສະພາບຈຸດພິເສດ, ທີ່ຕັ້ງ, ພາລະບົດບາດ ແລະ ໜ້າທີ່ການເມືອງ ຂອງກົມກອງ, ຜົນງານທີ່ຍາດມາໄດ້ຕະຫຼອດໄລຍະຜ່ານມາ, ກອງພົນທີ 3 ມີພາລະບົດບາດເປັນກຳລັງຫຼວງເຄື່ອນທີ່ ພາຍໃຕ້ການຊີ້ນຳ-ບັນຊາໂດຍກົງຮອບດ້ານຂອງກະຊວງປ້ອງກັນປະເທດ, ເປັນກຳລັງຫຼັກແຫຼ່ງໃນການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຊ່ວຍໜູນໃຫ້ຂອບເຂດ 4 ແຂວງພາກເໜືອຂອງລາວ ກໍຄື 4 ເມືອງພາກເໜືອຂອງແຂວງໄຊຍະບູລີ ແລະ 1 ເມືອງພາກໃຕ້ແຂວງບໍ່ແກ້ວ ໃນນັ້ນ ໄດ້ຊີ້ນຳອົງການ, ກົມກອງຈັດຕັ້ງກຳລັງລົງກໍ່ສ້າງຮາກຖານການເມືອງຕາມຂອບເຂດກົມກອງຕັ້ງທັບ, ແບບທາງກວ້າງ ແລະ ທາງເລິກ, ໄດ້ນຳເອົາກຳລັງລົງຊ່ວຍເຫຼືອພໍ່ແມ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດຢູ່ເມືອງແບ່ງ, ແຂວງອຸດົມໄຊ ແລະ ເມືອງຄອບແຂວງໄຊຍະບູລີ. ພ້ອມກັນນັ້ນ, ກໍໄດ້ເອົາໃຈໃສ່ປັບປຸງກໍ່ສ້າງກຳລັງໃຫ້ເຕີບໃຫຍ່ເຂັ້ມແຂງໃນທຸກດ້ານ, ສຸມໃສ່ອົບຮົມ-ຫັດແອບປັບປຸງລະບຽບແບບແຜນໃຫ້ມີຄວາມຮັດກຸມເປັນເອກະພາບ, ຊີ້ນຳຄະນະພັກ-ຄະນະບັນຊາແຕ່ລະຂັ້ນ, ແຕ່ລະກົມກອງ ສ້າງພະລາທິການກັບທີ່ຕາມທິດນຳເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງໂດຍສຸມໃສ່ເພີ່ມພູນຜະລິດຜົນປູກຝັງ-ລ້ຽງສັດ ເພື່ອຮັບປະກັນແກ້ໄຂຊີວິດການເປັນຢູ່ຂອງພະນັກງານ-ນັກຮົບນັບມື້ດີຂຶ້ນ, ໄປຄຽງຄູ່ກັນນັ້ນ, ກໍໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຂົງເຂດວຽກງານດ້ານຕ່າງໆ ທີ່ປິ່ນອ້ອມໜ້າທີ່ການເມືອງຂອງກົມກອງ ເຊິ່ງສາມາດຍາດໄດ້ຜົນສຳເລັດທີ່ເປັນພື້ນຖານຫຼາຍດ້ານ.



ກອງພົນທີ 2

ພ້ອມນັ້ນ, ສະຫາຍ ພົນຕີ ວົງສັກ ພັນທະວົງ ໄດ້ມີຄຳເຫັນໂອ້ລົມ ເຊິ່ງສະຫາຍໄດ້ຕີລາຄາສູງຕໍ່ໝາກຜົນຂອງການປະຕິວັດ ແລະ ມູນເຊື້ອຂອງກອງທັບ ເວົ້າລວມ, ເວົ້າສະເພາະຜົນສຳເລັດວຽກງານໃນຫຼາຍດ້ານຂອງກອງພົນທີ 3 ຍາດມາໄດ້, ພ້ອມທັງຍົກໃຫ້ເຫັນພາລະບົດບາດຂອງສະພາແຫ່ງຊາດ ເວົ້າສະເພາະແມ່ນພາລະບົດບາດຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຊີ້ແຈງໃຫ້ເຫັນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ພ້ອມທັງຍົກໃຫ້ເຫັນສະພາບການຂອງໂລກ ແລະ ພາກພື້ນ ກໍຄືຢູ່ໃນປະເທດເຮົາໃນປັດຈຸບັນ, ໂດຍອີງໃສ່ສະພາບການດັ່ງກ່າວ ແລະ ອີງໃສ່ຄວາມຮຽກຮ້ອງຕ້ອງການຂອງກອງທັບໃນໄລຍະໃໝ່ ຮຽກຮ້ອງບັນດາຄະນະພັກ-ຄະນະບັນຊາແຕ່ລະຂັ້ນ ຕະຫຼອດຮອດພະນັກງານ-ນັກຮົບ ທົ່ວກອງພົນທີ 3 ຈົ່ງສືບຕໍ່ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ເປັນຫຼັກແຫຼ່ງໃນການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ຫັນເອົາກຳລັງລົງກໍ່ສ້າງຮາກຖານການເມືອງພັດທະນາຊົນນະບົດຮອບດ້ານຕິດພັນກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ເດັດດ່ຽວສະກັດກັ້ນທຸກກົນອຸບາຍຫັນປ່ຽນໂດຍສັນຕິຂອງອິດທິກຳລັງປໍລະປັກ, ທັບມ້າງໃຫ້ໄດ້ໜໍ່ແໜງທີ່ກໍ່ໃຫ້ເກີດຄວາມບໍ່ສະຫງົບ ເພື່ອເຮັດໃຫ້ສະພາບພາຍໃນຂອບເຂດທົ່ວປະເທດມີຄວາມສະຫງົບທາງດ້ານການເມືອງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ສືບຕໍ່ປະຕິບັດ 2 ວາລະແຫ່ງຊາດໃຫ້ເຂັ້ມງວດ; ພ້ອມກັນນີ້, ກໍຕ້ອງເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກຂອງຄະນະພັກ-ຄະນະບັນຊາແຕ່ລະຂັ້ນໃຫ້ສອດຄ່ອງ, ເປັນເຈົ້າການເຮັດວຽກງານສຶກສາອົບຮົມການເມືອງ-ນຳພາແນວຄິດໃຫ້ພະນັກງານ-ນັກຮົບມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ສືບຕໍ່ປັບປຸງກໍ່ສ້າງກຳລັງທຸກເຫຼົ່າຮົບໃຫ້ມີຄວາມເຂັ້ມແຂງ ແລະ ໜັກແໜ້ນ ເຮັດໃຫ້ກຳລັງຫຼວງກາຍເປັນກຳລັງຫຼັກແຫຼ່ງຂອງກອງທັບເຮົາ, ສຸມໃສ່ສ້າງພະລາທິການກັບທີ່ ເພື່ອຮັບປະກັນກຸ້ມຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ສືບຕໍ່ປະຕິບັດແນວທາງປ່ຽນແປງໃໝ່ຂອງພັກ, ປະຕິບັດໜ້າທີ່ການເມືອງຂອງກອງທັບ ໃຫ້ມີໝາກຜົນດີກວ່າເກົ່າ ເພື່ອນຳພາກົມກອງກ້າວຂຶ້ນສ້າງທ່ວງທ່າໃໝ່ຢ່າງໜັກແໜ້ນ, ສ້າງ ແລະ ປັບປຸງກົມກອງໄປຕາມທິດສ້າງກອງທັບມີແບບແຜນທັນສະໄໝເທື່ອລະກ້າວ, ເຊີດຊູສະຕິລະວັງຕົວ ແລະ ມີສະຕິໃນການປົກປັກຮັກສາແນວທາງນະໂຍບາຍຂອງພັກ-ລັດ ປົກປັກຮັກສາໝາກຜົນຂອງການປະຕິວັດ, ປົກປັກຮັກສາລະບອບໃໝ່ປະຊາທິປະໄຕປະຊາຊົນໄວ້ໃຫ້ໝັ້ນຄົງ, ສົມທົບແໜ້ນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບກັບການສ້າງສາພັດທະນາເສດຖະກິດ-ສັງຄົມ, ສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງຕົນ, ຕັ້ງໜ້າປັບປຸງກຳລັງໃນທຸກດ້ານໃຫ້ໜັກແໜ້ນເຂັ້ມແຂງ, ເອົາໃຈໃສ່ຕໍ່ການປັບປຸງລະບອບຄຸ້ມຄອງບັນຊາ, ປັບປຸງກຳລັງປະເພດຕ່າງໆໂດຍຖືເອົາຄຸນນະພາບເປັນຕົ້ນຕໍ; ໃນນັ້ນ, ຖືເອົາຄຸນນະພາບທາງດ້ານການເມືອງ-ແນວຄິດເປັນກົກ. ຖືເອົາຄວາມສາມາດດ້ານວິຊາສະເພາະ, ຫົວຄິດປະດິດສ້າງ ແລະ ການຈັດຕັ້ງບັນຊາເປັນສິ່ງສຳຄັນຕ້ອງມີແບບແຜນປະຕິບັດລະບຽບຫັດແອບ ເພື່ອຍົກສູງຄວາມສາມາດທາງດ້ານສິລະປະຍຸດ-ຍຸດທະວິທີລະດັບວິຊາສະເພາະໃຫ້ສູງຂຶ້ນ ທັງຍົກສູງສະຕິການຈັດຕັ້ງລະບຽບວິໄນໃຫ້ເຂັ້ມງວດ ພ້ອມກັນນີ້, ກໍຕ້ອງຕັ້ງໜ້າປະກອບສ່ວນເຂົ້າໃນການຊ່ວຍເຫຼືອກຳລັງທ້ອງຖິ່ນຢູ່ຂັ້ນຮາກຖານໃນການປັບປຸງລະບົບການຈັດຕັ້ງ, ອົບຮົມຫັດແອບວຽກງານປ້ອງກັນຊາດໃຫ້ກວ້າງຂວາງເພື່ອເຮັດໃຫ້ເຂົາເຈົ້າສາມາດເຮັດລ້ອນໜ້າທີ່ໃນການປົກປັກຮັກສາທ້ອງຖິ່ນຂອງຕົນ, ປະຕິບັດແນວທາງການຕ່າງປະເທດ ແລະ ການຮ່ວມມືກັບປະເທດຕ່າງໆ, ປັບປຸງ ແລະ ເພີ່ມທະວີການຮ່ວມມືຮອບດ້ານກັບກອງທັບເພື່ອນມິດຍຸດທະສາດ (ສສ.ຫວຽດນາມ ແລະ ສປຈີນ) ແລະ ການຮ່ວມມືກັບບັນດາປະເທດສັງຄົມນິຍົມອ້າຍນ້ອງ ກໍຄືເພື່ອນມິດທີ່ກ້າວໜ້າໃຫ້ດີ ແລະ ຍາດແຍ່ງເອົາການຊ່ວຍເຫຼືອຈາກສາກົນ ເພື່ອປັບປຸງກໍ່ສ້າງກອງທັບໃຫ້ກ້າວໜ້າສູ່ຄຸນນະພາບໃໝ່ ແລະ ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.



ກອງພົນທີ 3

## ກຳມາທິການ...

(ຕໍ່ຈາກໜ້າ 1)

ຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ປະທານ-ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ບັນດາກະຊວງ, ອົງການຂັ້ນສູນກາງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນໂອກາດນີ້, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ຮ່າງກົດໝາຍ ຈຳນວນ 4 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍການປົກຄອງ, ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ, ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ ແລະ ຮ່າງກົດໝາຍວ່າດ້ວຍການຈັດຫາງານ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ນັ້ນ ເປັນຮ່າງກົດໝາຍທີ່ມີຄວາມຫຼູແຫຼມ, ລະອຽດອ່ອນທີ່ພົວພັນກັບສິດ ແລະ ຜົນປະໂຫຍດຂອງລັດ ແລະ ຂອງປະຊາຊົນໂດຍກົງ; ສະນັ້ນ, ເພື່ອຮັບປະກັນໃຫ້ບັນດາຮ່າງກົດໝາຍເຫຼົ່ານັ້ນ ໃຫ້ມີຄວາມສອດຄ່ອງ ແລະ ສາມາດຈັດຕັ້ງປະຕິບັດໄດ້ ໃນເມື່ອສະພາແຫ່ງຊາດໄດ້ພິຈາລະນາຮັບຮອງ ແລະ ປະທານປະເທດ ປະກາດໃຊ້ ໃນວັນທີ 15 ພຶດສະພາ 2023 ຈຶ່ງໄດ້ຈັດກອງປະຊຸມຮ່ວມລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ ກອງປະຊຸມໄດ້ຕົກລົງໃຫ້ນຳເອົາຮ່າງກົດໝາຍ ຈຳນວນ 4 ສະບັບດັ່ງກ່າວນີ້ ມາທາບທາມຄຳຄິດຄຳເຫັນຄືນໃໝ່ ໂດຍໃຫ້ຈັດການທາບທາມຢູ່ສູນກາງ ແລະ ນຳໄປທາບທາມຄຳຄິດຄຳເຫັນນຳບັນດາທ່ານຄູອາຈານ ແລະ ນັກສຶກສາ ທີ່ຄະນະນິຕິສາດ ແລະ ລັດຖະສາດ; ສະນັ້ນ, ກຳມາທິການກົດໝາຍ ຈຶ່ງໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຈັດກອງປະຊຸມທາບທາມຄຳຄິດຄຳເຫັນຢູ່ສະພາແຫ່ງຊາດ ໂດຍເຊີນບັນດາທ່ານຜູ້ຕາງໜ້າຈາກທຸກກະຊວງ, ອົງການ, ສະພາປະຊາຊົນນະຄອນຫຼວງວຽງຈັນ, ອົງການປົກຄອງນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າເມືອງ, ຮອງເຈົ້າເມືອງໃນ5ຕົວເມືອງໃນເທດສະບານນະຄອນຫຼວງວຽງຈັນ ແລະ ສືບຕໍ່ທາບທາມຄຳຄິດຄຳເຫັນນຳຜູ້ປະກອບການ ແລະ ພາກສ່ວນທຸລະກິດທີ່ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ເພື່ອລະດົມການປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 4 ສະບັບ ເປົ້າໝາຍເພື່ອກຳນົດເນື້ອໃນໃຫ້ມີຄວາມຮັດກຸມ, ຊັດເຈນ, ສອດຄ່ອງກັບກົດໝາຍອື່ນ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນມໍ່ໆນີ້ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານທີ່ເຂົ້າຮ່ວມ ຈະໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳຄິດຄຳໃສ່ຮ່າງກົດໝາຍ ຈຳນວນ 4 ສະບັບນີ້ ດ້ວຍຄວາມຮັບຜິດຊອບສູງ ແລະ ມີບັນຍັດກາດທີ່ຟົດຟື້ນ.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການສະເໜີໂດຍຫຍໍ້ກ່ຽວກັບເຫດຜົນ, ຄວາມຈຳເປັນ ແລະ ເນື້ອໃນການສ້າງຮ່າງກົດໝາຍ ຈຳນວນ 4 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍການປົກຄອງ, ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ, ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ ແລະ ຮ່າງກົດໝາຍວ່າດ້ວຍການຈັດຫາງານ ຈາກບັນດາຜູ້ຕາງໜ້າຄະນະຮັບຜິດຊອບສ້າງຮ່າງກົດໝາຍດັ່ງກ່າວ; ຈາກນັ້ນ, ປະທານກອງປະຊຸມໄດ້ສະເໜີຄຳເຫັນແນະນຳ ກ່ຽວກັບການຄົ້ນຄວ້າຕາມຄຳຖາມເຈາະຈີ້ມ; ພ້ອມດຽວກັນນັ້ນ, ບັນດາຜູ້ເຂົ້າຮ່ວມທັງໝົດໄດ້ພ້ອມກັນປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ 4 ສະບັບ ດ້ວຍຄວາມຮັບຜິດຊອບສູງ ແລະ ກົງໄປກົງມາ.

(ກຸກກິກ ບຸດດາໄຊ)

# ຄະນະຜູ້ແທນສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມ ສັງເກດການເລືອກຕັ້ງທົ່ວໄປ ຢູ່ລາຊະອານາຈັກໄທ



(ສພຊ) ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍ ທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ສຳເລັດການເຂົ້າຮ່ວມການສັງເກດການເລືອກຕັ້ງທົ່ວໄປ ຢູ່ນະຄອນຫຼວງບາງກອກ ລາຊະອານາຈັກໄທ ໃນລະຫວ່າງວັນທີ 11-15 ພຶດສະພາ 2023, ເປັນການເລືອກຕັ້ງສະມາຊິກສະພາຜູ້ແທນລາສະດອນ ຫຼື ສະພາຕໍ່າ ຂອງລາຊະອານາຈັກໄທ ເຊິ່ງຈະຈັດການເລືອກຕັ້ງໃນທຸກ 4 ປີ ໂດຍແມ່ນຄະນະກຳມະການການເລືອກຕັ້ງຂອງໄທ ເປັນຜູ້ຮັບຜິດຊອບການເລືອກຕັ້ງຕາມລັດຖະທຳມະນູນຂອງລາຊະອານາຈັກໄທ ສະບັບປີ 1997.

ໃນໂອກາດດັ່ງກ່າວ, ຄະນະສັງເກດການຂອງສະພາແຫ່ງຊາດລາວ ໄດ້ເຂົ້າຮ່ວມກອງປະຊຸມພົບປະກັບຄະນະກຳມະການເລືອກຕັ້ງຂອງໄທ ເພື່ອຮັບຟັງ ແລະ ກຳໄດ້ເນື້ອໃນກ່ຽວກັບພາລະບົດບາດ, ໜ້າທີ່ ຂອງຄະນະກຳມາທິການການເລືອກຕັ້ງຂອງໄທ, ລະບົບການເລືອກຕັ້ງ, ຂະບວນການຈັດການເລືອກຕັ້ງ, ການສືບສວນ-ສອບສວນ ແລະ ແນວທາງປ້ອງກັນການປະພຶດທີ່ບໍ່ຖືກຕ້ອງໃນການເລືອກຕັ້ງ, ເຂົ້າຮ່ວມສັງເກດການແຈກຢາຍອັດສະດຸ ແລະ ອຸປະກອນການເລືອກຕັ້ງ ແລະ ຂັ້ນຕອນການກະກຽມການເລືອກຕັ້ງ, ສັງເກດການການເປີດໜ່ວຍປ່ອນບັດ ແລະ ຂະບວນການປ່ອນບັດແລະສັງເກດການການປິດໜ່ວຍປ່ອນບັດ ແລະ ຂະບວນການນັບຄະແນນສຽງຕົວຈິງ ຢູ່ບັນດາໜ່ວຍເລືອກຕັ້ງຂອງນະຄອນຫຼວງບາງກອກ ແຂວງປະທຸມທານີ ແລະ ແຂວງນົນທະບູລີ, ພ້ອມທັງຢ້ຽມຢາມສຳນັກງານຄະນະກຳມະການເລືອກຕັ້ງຂອງໄທ ເພື່ອຕິດຕາມ ແລະ ສັງເກດການຜົນການນັບຄະແນນຢ່າງບໍ່ເປັນທາງການ ຢູ່ສູນການລາຍງານຜົນການນັບຄະແນນການເລືອກຕັ້ງຮ່ວມກັບຜູ້ເຂົ້າຮ່ວມສັງເກດການຈາກ 21 ປະເທດ ແລະ 8 ອົງການຈັດຕັ້ງສາກົນ.

ຜ່ານການສັງເກດການສັງລວມແລ້ວເຫັນວ່າ ການກະກຽມ ແລະ ການດຳເນີນການເລືອກຕັ້ງແຕ່ຕົ້ນຕະຫຼອດປາຍແມ່ນມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະຫງົບ, ປອດໄພ ແລະ ມີຜົນສຳເລັດເປັນຢ່າງດີ.

(ນັກຂ່າວ: ກຕທ)

## ສຳເລັດການ...

(ຕໍ່ຈາກໜ້າ 1)

"ທັນຈາກປະເທດບໍ່ມີຊາຍແດນຕິດຈອດກັບທະເລ ເປັນປະເທດແຫ່ງການເຊື່ອມໂຍງເຊື່ອມຈອດ" ຂອງ ສປປລາວ ເຂົ້າກັບຂໍ້ລິເລີ່ມດັ່ງກ່າວ, ທັງໄດ້ຍົກໃຫ້ເຫັນບັນດາກົນໄກການຮ່ວມມືທີ່ ສປປລາວ ໄດ້ເຂົ້າຮ່ວມ ແລະ ຜົນປະໂຫຍດທີ່ ສປປລາວ ໄດ້ຮັບຈາກຂອບການຮ່ວມມືດັ່ງກ່າວ, ເຊິ່ງອັນພົ້ນເດັ່ນທີ່ສຸດແມ່ນໂຄງການທາງລົດໄຟລາວ-ຈີນ ທີ່ໄດ້ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນລາວ ແລະ ກາຍເປັນທ່າແຮງສຳຄັນ ໃນການພັດທະນາເສດຖະກິດ ຂອງ ສປປລາວ ໃນປັດຈຸບັນ.

ນອກຈາກການເຂົ້າຮ່ວມກອງປະຊຸມດັ່ງກ່າວແລ້ວ, ສະຫາຍ ນາງ ສູນທອນ ໄຊຍະຈັກ ຍັງໄດ້ເຂົ້າຮ່ວມພິທີເປີດເວທີສົນທະນາການຮ່ວມມືສາກົນຊ່ອງທາງໃໝ່ໃນການເຊື່ອມໂຍງທາງບົກ-ທາງທະເລ ຄັ້ງທີ 5 ແລະ ກອງປະຊຸມສົ່ງເສີມການຄ້າ-ການລົງທຶນສາກົນ ພາກຕາເວັນຕົກຈີນ.

ໃນໂອກາດຢ້ຽມຢາມດັ່ງກ່າວ,ສະຫາຍນາງສູນທອນ ໄຊຍະຈັກ ໄດ້ພົບປະກັບສະຫາຍປອນເຈ່ຍຈຸນກຳມະການກົມການເມືອງສູນກາງພັກ, ເລຂາພັກນະຄອນສີງຊິ້ງ ເຊິ່ງສະຫາຍໄດ້ຕີລາຄາສູງຕໍ່ການກະກຽມກອງປະຊຸມຂອງນະຄອນສີງຊິ້ງ, ຜົນສຳເລັດຂອງການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ໃນທ້າຍປີ 2022 ຜ່ານມາ ແລະ ສະແດງຄວາມຊົມເຊີຍຕໍ່ການຈັດຕັ້ງຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ດັ່ງກ່າວ ໃນນະຄອນສີງຊິ້ງ; ໄດ້ແຈ້ງສະພາບພົ້ນເດັ່ນພາຍໃນຂອງລາວ ໃຫ້ຝ່າຍຈີນຊາບ, ໄດ້ຕີລາຄາຜົນຂອງການຮ່ວມມືສອງຝ່າຍ ໃນໄລຍະຜ່ານມາ ແລະ ໄດ້ແລກປ່ຽນຄຳຄິດຄຳເຫັນນຳຝ່າຍຈີນກ່ຽວກັບທິດທາງໃນການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ລາວ-ຈີນ ກໍຄື ລະຫວ່າງ ສປປລາວ ກັບ ນະຄອນສີງຊິ້ງ ຂອງ ສປ ຈີນ ໃນຕໍ່ໜ້າ.

ພ້ອມນັ້ນ, ສະຫາຍເລຂາຄະນະພັກ ນະຄອນສີງຊິ້ງ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ການເຂົ້າຮ່ວມກອງປະຊຸມຄັ້ງນີ້ ຂອງຄະນະຜູ້ແທນລາວ ແລະ ສະແດງຄວາມຂອບໃຈ ຕໍ່ການປະກອບສ່ວນຂອງຄະນະຜູ້ແທນລາວ ໃນກອງປະຊຸມດັ່ງກ່າວ, ພ້ອມທັງແຈ້ງສະພາບການພັດທະນາເສດຖະກິດ-ສັງຄົມ ຂອງນະຄອນສີງຊິ້ງໃນໄລຍະຜ່ານມາ, ພິເສດແມ່ນການປະຕິບັດຕາມມະຕິກອງປະຊຸມໃຫຍ່ຄັ້ງທີ XX ຂອງພັກກອມມູນິດຈີນ ໃນການສ້າງນະຄອນສີງຊິ້ງ ເປັນສູນກາງໃນການເຊື່ອມຕໍ່ເຊື່ອມໂຍງກັບພາກພື້ນ ທັງທາງບົກ ແລະ ທາງທະເລ.

ໃນການພົບປະ, ສອງຝ່າຍ ໄດ້ເຫັນດີເປັນເອກະພາບກັນຕີລາຄາສູງ ຕໍ່ການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ລາວ-ຈີນ ໃນໄລຍະຜ່ານມາ, ເຊິ່ງສະແດງອອກໃນການຈັດຕັ້ງປະຕິບັດບັນດາແຜນການຮ່ວມມື ລະຫວ່າງ ສອງພັກ, ກົນໄກການຮ່ວມມືຕ່າງໆ ລະຫວ່າງ ສອງລັດ ລາວ-ຈີນ ຢ່າງຕັ້ງໜ້າ ແລະ ນັບມື້ນັບເປັນຮູບປະທຳ, ໄດ້ຕີລາຄາສູງ ຕໍ່ຜົນສຳເລັດການຢ້ຽມຢາມລັດຖະກິດ ສປ ຈີນ ຂອງສະຫາຍທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປລາວ ໃນທ້າຍປີ 2022 ຜ່ານມາ ແລະ ເຫັນດີເປັນເອກະພາບກັນໃນການຊຸກຍູ້ການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງລະຫວ່າງການນຳສູງສຸດຂອງສອງພັກ, ສອງລັດ ລາວ-ຈີນ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ໃນວາລະກອງປະຊຸມ, ສະຫາຍ ພົງສະຫວັນ ສິດທະວົງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງໄຊຍະບູລີໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ; ຈາກນັ້ນ, ສະຫາຍ ດວງຕາ ໄຊວຸດ ຮອງເລຂາພັກແຂວງ, ໄດ້ຜ່ານບົດສະຫຼຸບການນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງອົງຄະນະພັກແຂວງໄຊຍະບູລີ ກາງສະໄໝ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃນໄລຍະກາງສະໄໝຜ່ານມາ ແລະ ທິດທາງນຳພາຈັດຕັ້ງປະຕິບັດຄາດໝາຍສູ້ຊົນແຕ່ລະດ້ານໃນຕໍ່ໜ້າ; ພ້ອມກັນນັ້ນ, ສະຫາຍ ສົມຈິດ ຈັນທະວົງ ຮອງເລຂາພັກແຂວງ ໄດ້ຜ່ານບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະກາງສະໄໝຜ່ານມາ ຕິດພັນກັບການຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດສອງວາລະແຫ່ງຊາດ ແລະ ທິດທາງແຜນການ, ຄາດໝາຍສູ້ຊົນໃນຕໍ່ໜ້າ ເຊິ່ງໄດ້ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດວຽກງານຮອບດ້ານໃນກາງສະໄໝທີ່ຜ່ານມາ; ໂດຍລວມແລ້ວຄະນະບໍລິຫານງານພັກແຂວງໄຊຍະບູລີ ໄດ້ນຳພາຄະນະພັກຂັ້ນຕ່າງໆ ຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ຂອງແຂວງ ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໂດຍໄດ້ຫັນເປັນແຜນການ, ໂຄງການລະອຽດຂອງແຂວງ, ເມືອງ ແລະ ຂະແໜງການຕາມທ່າແຮງບົ່ມຊ້ອນຢ່າງມີຈຸດສຸມ ເຊິ່ງເຮັດໃຫ້ເສດຖະກິດຂອງແຂວງ ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ສະເລ່ຍໃນລະດັບ 4,9% ຕໍ່ປີ, ລວມຍອດຜະລິດຕະພັນພາຍໃນ (GDP) ບັນລຸໄດ້ 12.339 ຕື້ກີບ, ສະເລ່ຍຕໍ່ຫົວຄົນ 29.470.000 ກີບຕໍ່ຄົນຕໍ່ປີ ຫຼື ເທົ່າກັບ 1.734 ໂດລາ; ການປູກ-ການລ້ຽງຂອງປະຊາຊົນໄດ້ມີການຂະຫຍາຍຕົວ ແລະ ຫັນສູ່ທັນສະໄໝ ແລະ ຕິດພັນກັບການປຸງແຕ່ງ, ວຽກງານພື້ນຖານໂຄງລ່າງ ແລະ ວັດທະນະທຳ-ສັງຄົມ ກໍໄດ້ຮັບການພັດທະນາ ແລະ ຍົກລະດັບດີຂຶ້ນເປັນກ້າວໆ.

ກອງປະຊຸມຄັ້ງນີ້, ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດຄຳເຫັນໃສ່ 2 ຮ່າງບົດສະຫຼຸບ: ບົດສະຫຼຸບການນຳພາຈັດຕັ້ງປະຕິບັດກອງປະຊຸມໃຫຍ່ຄັ້ງທີ VII ຂອງອົງຄະນະພັກແຂວງ ຕິດພັນກັບການຈັດຕັ້ງປະຕິບັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກໃນໄລຍະກາງສະໄໝຜ່ານມາ ແລະ ທິດທາງນຳພາປະຕິບັດຄາດໝາຍສູ້ຊົນແຕ່ລະດ້ານໃນຕໍ່ໜ້າ. ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນໄລຍະກາງສະໄໝຜ່ານມາ ຕິດພັນກັບການຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດສອງວາລະແຫ່ງຊາດ ແລະ ທິດທາງແຜນການຄາດໝາຍສູ້ຊົນໃນຕໍ່ໜ້າ.

ໃນໂອກາດເຄື່ອນໄຫວເຮັດວຽກຢູ່ແຂວງໄຊຍະບູລີ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ເຄື່ອນໄຫວຢ້ຽມຢາມເມືອງບໍ່ແຕນ ໂດຍສະຫາຍ ບຸນທອງ ວັນນາ ຄະນະປະຈຳພັກເມືອງ, ຮອງເຈົ້າເມືອງບໍ່ແຕນ ໄດ້ລາຍງານສະພາບລວມໂດຍຫຍໍ້ໃນການນຳພາ-ຊີ້ນຳຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VII ອົງຄະນະພັກແຂວງ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VII ອົງຄະນະພັກເມືອງ, ແຜນພັດທະນາເສດຖະກິດ-ສັງຄົມຕິດພັນກັບການຜັນຂະຫຍາຍ 2 ວາລະແຫ່ງຊາດ, ຍູ້ຂະບວນດ້ານຕ່າງໆ ມີການຫັນປ່ຽນຢ່າງຕັ້ງໜ້າ ແລະ ມີຜົນສຳເລັດໃນຫຼາຍດ້ານ; ພ້ອມນັ້ນ,ຍັງໄດ້ສະເໜີບາງບັນຫາເປັນຕົ້ນ: ບັນຫາໄພແຫ້ງແລ້ງ ເຮັດໃຫ້ການຕອບສະໜອງອາຫານຂອງສັດລ້ຽງປະເພດງົວ,ຄວາຍແມ່ນພົບຄວາມຫຍຸ້ງຍາກ, ສະເໜີຂໍອະນຸມັດໂຄງການສ້າງຫ້ອງການຫຼັງໃໝ່ ແລະ ໂຄງການສ້າງທາງເຂົ້າແຫຼ່ງທ່ອງທ່ຽວຕາດສະແນນ; ໃນຕອນທ້າຍ, ໄດ້ຮັບຟັງການໂອ້ລົມຂອງປະທານສະພາແຫ່ງຊາດ, ຈາກນັ້ນ ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ລົງຕິດຕາມການກໍ່ສ້າງຕ້ານເຈື່ອນລຽບຕາມຊາຍແດນແມ່ນ້ຳເຫືອງຈຸດໜອງຄອບບ້ານນາຂ່າ ແລະ ໂຄງການສຳປະທານການພັດທະນາແຫຼ່ງທ່ອງທ່ຽວນ້ຳຕົກຕາດສະແນນຕື່ມອີກ.

# ກອງປະຊຸມສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ

(ສພຊ) ໃນວັນທີ 10-11 ພຶດສະພາ 2023 ທີ່ສະພາປະຊາຊົນແຂວງຄຳມ່ວນ ໄດ້ຈັດກອງປະຊຸມສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງສະພາປະຊາຊົນແຂວງຄຳມ່ວນ ແຕ່ປີ 2021-2025 ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ, ມີທ່ານ ນາງ ບົງອອນ ໄຊຍະສິດ ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງ 10 ຕົວເມືອງ, ຄະນະຮັບຜິດຊອບການຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ຄະນະກຳມະການ, ຄະນະເລຂາທິການ,ຫົວໜ້າ-ຮອງຫົວໜ້າຂະແໜງຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.



ເພື່ອດຳເນີນການທາບທາມ, ຄາດຄະເນເປົ້າໝາຍບຸກຄະລາກອນໃຫ້ມີແຫຼ່ງເລືອກເຟັ້ນ, ຈັດວາງເຂົ້າໃສ່ຕຳແໜ່ງພະນັກງານນຳພາ-ຄຸ້ມຄອງໃນແຕ່ລະຕຳແໜ່ງງານ ແນໃສ່ຮັບປະກັນລັກສະນະສືບທອດປ່ຽນແທນຕໍ່ເນື່ອງໃນສະເພາະໜ້າ ແລະ ຍາວນານ ພ້ອມທັງເປັນການກະກຽມບຸກຄະລາກອນໃນລັກສະນະເປີດກວ້າງ ໃຫ້ມີແຫຼ່ງເລືອກເຟັ້ນພະນັກງານນຳພາ-ຄຸ້ມຄອງ ເພື່ອຕອບສະໜອງທາງດ້ານຈຳນວນ,ຄຸນນະພາບ, ໂຄງປະກອບໃຫ້ຄົບຊຸດ ຕາມຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມຕ້ອງການຂອງບັນດາຕຳແໜ່ງງານນຳພາ-ຄຸ້ມຄອງຢູ່ແຕ່ລະຂົງເຂດ ກໍຄືຂົງເຂດສະພາປະຊາຊົນຂັ້ນແຂວງ.

ໃນກອງປະຊຸມຄັ້ງນີ້ ໄດ້ຮັບຟັງເຊື່ອມຊຶມ, ກຳແໜ້ນເນື້ອໃນຈິດໃຈສຳຄັນຂອງມະຕິກົມການເມືອງສູນກາງພັກ ເລກທີ 032/ກມສພ, ລົງວັນທີ 3 ມັງກອນ 2023 ວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາຄຸ້ມຄອງ, ຄຳແນະນຳ ສະບັບເລກທີ 292/ຄຈສພ, ລົງວັນທີ 26 ເມສາ 2018 ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກວ່າດ້ວຍມາດຕະຖານຂອງພະນັກງານນຳພາ-ຄຸ້ມຄອງ, ຮັບຟັງແຈ້ງການ ສະບັບເລກທີ 0192/ຄລສ.ຈງ, ລົງວັນທີ 21 ພຶດສະພາ 2018 ກ່ຽວກັບການຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງຢູ່ສະພາປະຊາຊົນແຂວງ-ນະຄອນຫຼວງ, ຈາກນັ້ນ ຕາມວາລະຂອງການດຳເນີນກອງປະຊຸມ ເປັນເວລາ 2 ວັນເຕັມ ກໍໄດ້ມີການລົງຄະແນນສຽງທາບທາມເປັນ ຮອບ 1, 2 ແລະ ຮອບ 3 ຕາມລຳດັບ.

ປະທານກອງປະຊຸມຍັງໄດ້ຮຽກຮ້ອງໃຫ້ບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມທັງໝົດ ຈົ່ງສຸມໃສ່ຕິດຕາມ ແລະ ຄົ້ນຄ້ວາໃຫ້ເລິກເຊິ່ງຕໍ່ເນື້ອໃນ, ຄວາມໝາຍຄວາມສຳຄັນຂອງການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ມາດຕະຖານຂອງພະນັກງານເພື່ອມາເບິ່ງໃສ່ພະນັກງານ. ພ້ອມກັນນັ້ນ, ຈົ່ງໄດ້ຄົ້ນຄິດພິຈາລະນາຢ່າງຮອບດ້ານ, ນຳໃຊ້ສິດປະຊາທິປະໄຕດ້ວຍຄວາມຮັບຜິດຊອບສູງ ເພື່ອຊອກໃຫ້ເຫັນບຸກຄົນຜູ້ທີ່ດີເດັ່ນຈາກຂະບວນການຕົວຈິງ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຕື່ນຕົວຫ້າວຫັນ, ມີຄວາມຮູ້-ຄວາມສາມາດ, ຮູ້ນຳພາ ເພື່ອເປັນບ່ອນອີງໃຫ້ແກ່ການພິຈາລະນາລົງຄະແນນສຽງທາບທາມຕົວຈິງ.

**(ເອື້ອ ມະໂນສີງ)**



# ຫາລືກ່ຽວກັບບັນດາໂຄງການລົງທຶນຂອງລັດ ປະຈຳປີ 2023



(ສພຊ)ຕອນເຊົ້າວັນທີ 18 ພຶດສະພາ 2023 ທີ່ສະພາປະຊາຊົນແຂວງ (ສພຂ) ເຊກອງ ໄດ້ມີກອງປະຊຸມປຶກສາຫາລືກ່ຽວກັບບັນດາໂຄງການລົງທຶນຂອງລັດປະຈຳປີ 2023 ໂດຍການເປັນປະທານຂອງທ່ານ ດົງເພັດ ພະຍົນ ປະທານ ສພຂ, ມີບັນດາທ່ານຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ພະແນກການໃນຂົງເຂດເສດຖະກິດ, ຂົງເຂດວັດທະນະທຳ-ສັງຄົມ ພ້ອມດ້ວຍຂະແໜງການທີ່ກ່ຽວຂ້ອງພາຍໃນ ສພຂ ເຂົ້າຮ່ວມ.

ກອງປະຊຸມໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ປຶກສາຫາລືກ່ຽວກັບບັນດາໂຄງການລົງທຶນຂອງລັດ ປະຈຳປີ 2023 ໂດຍສະເພາະການຈັດສັນງົບປະມານໂຄງການລົງທຶນຂອງລັດປະຈຳປີ 2023 ຂອງແຂວງເຊກອງ ກ່ອນການພິຈາລະນາ ແລະ ຮັບຮອງຂອງສະພາປະຊາຊົນແຂວງ ເຊິ່ງບັນດາໂຄງການທີ່ນຳມາຫາລືໃນຄັ້ງນີ້ ມີໂຄງການສະເໜີໃໝ່ບ້ວງທຶນປົກກະຕິມີ 9 ໂຄງການ ລວມມູນຄ່າ 6,401.04 ຕື້ກີບ, ອະນຸມັດປີ 2023 ຈຳນວນ 1,214.82 ຕື້ກີບ ໃນນັ້ນ, ມີໂຄງການສ້ອມແປງຊົນລະປະທານບ້ານຕະອູນ-ນາເວີ; ໂຄງການບຸກເບີກເນື້ອທີ່ນາ 4 ຕົວເມືອງ; ໂຄງການສຳຫຼວດຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ແບບມີສ່ວນຮ່ວມລະດັບ 5 ບ້ານຄື: ກຸ່ມບ້ານດາກປຣາ, ບ້ານດາກປຣາເກົ່າ, ບ້ານດາກປຣາໃໝ່, ບ້ານດາກປຣາເນີ, ບ້ານບຣອງນ້ອຍ ແລະ ບ້ານບຣອງໃຫຍ່ ເມືອງດາກຈຶງ; ໂຄງການທະລຸເສັ້ນທາງເຂົ້າເຂດທຳການຜະລິດບ້ານກັນດອນ-ອາຮັງ-ປະຕາງ ເມືອງກະລືມ; ໂຄງການກໍ່ສ້າງປັບປຸງແລະສ້ອມແປງໂຮງຮຽນທິດສະດີການເມືອງ-ການປົກຄອງແຂວງ; ໂຄງການສຳຫຼວດຄວາມເປັນໄປໄດ້ກໍ່ສ້າງລະບົບນ້ຳລິນ ບ້ານທົ່ງແຄນ ເມືອງກະລືມ; ໂຄງການສ້ອມແປງເຮືອນພັກ-ພະນັກງານ ກຸ່ມບ້ານຊຽງຫຼວງ ເມືອງດາກຈຶງ; ໂຄງການສ້ອມແປງເພີ່ມເຕີມສູນພັດທະນາແມ່ຍິງ ແລະ ບັນດາເຜົ່າແຂວງ ແລະ ຕິດຕາມຊຸກຍູ້ປະເມີນແນະນຳກ່ຽວກັບວຽກງານແຜນການ ແລະ ວຽກປະເມີນຜົນຂັ້ນເມືອງ.

ພ້ອມນັ້ນ,ຍັງໄດ້ປຶກສາຫາລືກ່ຽວກັບບັນດາໂຄງການສະເໜີໃໝ່ບ້ວງທຶນພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຈຳນວນ 2 ໂຄງການ ລວມມູນຄ່າ 1,841.98 ຕື້ກີບ ແລະ ອະນຸມັດ ປີ 2023 ຈຳນວນ 225.50 ລ້ານກີບ ໃນນັ້ນ, ມີໂຄງການກໍ່ສ້າງຕະຫຼາດຊຸມຊົນບ້ານໂກຣ ແລະ ໂຄງການສ້ອມແປງເສັ້ນທາງເຂດຊົນນະບົດ (ກຸ່ມບ້ານວັງປະງໍ ເມືອງກະລືມ) ແຕ່ແຍກທ່າບ້ານຫ້ວຍໄລ, ບ້ານອາເວີນ ແລະ ໂຄງການສືບຕໍ່ບ້ວງທຶນຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນມີ 2 ໂຄງການ ລວມມູນຄ່າທັງໝົດ 8,026.98 ຕື້ກີບ ແລະ ອະນຸມັດປີ 2023 ຈຳນວນ 854.48 ລ້ານກີບ ໃນນັ້ນ, ມີໂຄງການຍົກຍ້າຍຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ (ຈຸດສຸມບ້ານປະນອນ ເມືອງກະລືມ) ບ້ານຈະເຕົ-ບ້ານອາເກວ-ບ້ານອາໂກນ ແລະ ໂຄງການຈັດສັນອາຊີບຄົງທີ່ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນບ້ານອາຣອງ-ບ້ານໂປມ-ບ້ານອາປຽດ-ບ້ານປະແຫຼງ ແລະ ບ້ານຕະລ້ອງ ເມືອງກະລືມ.

# ປາຖະກະຖາມູນເຊື້ອ 3 ວັນສຳຄັນທາງປະຫວັດສາດຂອງຊາດ

(ສພຊ) ໃນວັນທີ 19 ພຶດສະພາ 2023 ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຈັດພິທີປາຖະກະຖາມູນເຊື້ອວັນສຳຄັນທາງປະຫວັດສາດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຫຼວງນ້ຳທາ ໂດຍການເຂົ້າຮ່ວມມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.



ໃນພິທີ, ທ່ານ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຂອງສະພາປະຊາຊົນແຂວງ ໄດ້ຂຶ້ນປາຖະກະຖາເລົ່າມູນເຊື້ອວັນສຳຄັນທາງປະຫວັດສາດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄື: ວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນທີ່ທົ່ງໄຫຫີນ ແຂວງຊຽງຂວາງ ຄົບຮອບ 64 ປີ (18 ພຶດສະພາ 1959- ພຶດສະພາ 2023); ວັນວິລະກຳໂຕນຄຸກຢ່າງມະຫັດສະຈັນຂອງບັນດາທ່ານຜູ້ນຳຂອງພັກ ແລະ ແນວລາວຮັກຊາດ ຄົບຮອບ 63 ປີ (24 ພຶດສະພາ 1960-24 ພຶດສະພາ 2023). ພ້ອມດຽວກັນ, ທ່ານ ນາງ ຄອນສະຫວັນ ອິນທອງຈັນ ຮອງປະທານກຳມະບານຮາກຖານສະພາປະຊາຊົນແຂວງ ໄດ້ຂຶ້ນປາຖະກະຖາວັນກຳມະກອນສາກົນ ຄົບຮອບ 137 ປີ (1 ພຶດສະພາ 1886-1 ພຶດສະພາ 2023) ທັງນີ້, ກໍເພື່ອເຮັດໃຫ້ພະນັກງານວິຊາການໄດ້ຮັບຮູ້ເຊື່ອມຊຶມມູນເຊື້ອວັນສຳຄັນທາງປະຫວັດສາດຢ່າງທົ່ວເຖິງ.



# ກອງປະຊຸມກາງສະໄໝ ຂອງໜ່ວຍພັກສະພາປະຊາຊົນແຂວງບໍ່ແກ້ວ



(ສພຊ) ວັນທີ 11 ພຶດສະພາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍ່ແກ້ວ ໄດ້ມີກອງປະຊຸມກາງສະໄໝຂອງກອງປະຊຸມໃຫຍ່ໜ່ວຍພັກສະພາປະຊາຊົນແຂວງບໍ່ແກ້ວ ຄັ້ງທີ II ໂດຍການເປັນປະທານຂອງສະຫາຍ ນາງ ດາວ ໄຊເສດຖາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ທັງເປັນເລຂາໜ່ວຍພັກສະພາປະຊາຊົນແຂວງ; ເຂົ້າຮ່ວມມີສະຫາຍ ປອ. ບົວຄົງ ນາມມະວົງ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງແຂວງບໍ່ແກ້ວ, ສະຫາຍ ຈອມສີ ລັດຕະນະປັນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ສະຫາຍ ສົມພອນ ແກ້ວມະນີ ຄະນະປະຈຳພັກແຂວງ, ຫົວໜ້າຄະນະຈັດຕັ້ງແຂວງ, ມີຄະນະໜ່ວຍພັກສະພາປະຊາຊົນ, ມີຕາງຄະນະຈັດຕັ້ງແຂວງ, ກວດກາພັກ-ລັດແຂວງ, ສະມາຊິກພັກສົມບູນ-ສຳຮອງເຂົ້າຮ່ວມ.

ໃນກອງປະຊຸມ, ສະຫາຍ ນາງ ດາວ ໄຊເສດຖາ ໄດ້ຜ່ານບົດສະຫຼຸບຕີລາຄາຄືນໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ II ໄລຍະກາງສະໄໝ ແລະ ທິດທາງແຜນການທ້າຍສະໄໝ, ຜົນສຳເລັດໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ໄລຍະກາງສະໄໝ ໂດຍໄດ້ຖືເອົາວຽກງານການເມືອງ-ແນວຄິດເປັນກົກ ແລະ ເປັນວຽກງານບູລິມະສິດສຳຄັນອັນໜຶ່ງໃນການຈັດຕັ້ງເຄື່ອນໄຫວນຳພາຂອງຕົນ ແລະ ໄດ້ນຳພາ-ຊີ້ນຳປະຕິບັດວຽກງານຢ່າງເປັນລະບົບຕໍ່ເນື່ອງສອດຄ່ອງໃນໜ້າທີ່ທຸກໆວຽກງານ, ໄດ້ຈັດຕັ້ງເຊື່ອມຊຶມແນວທາງແຜນນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຢ່າງຄົບຖ້ວນ ແລະ ທົ່ວເຖິງ. ດ້ານກົງຈັກການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ ຄະນະໜ່ວຍພັກໄດ້ເອົາໃຈໃສ່ຊີ້ນຳໃນການປັບປຸງກໍ່ສ້າງພັກໃຫ້ມີຄວາມໜັກແໜ້ນເຂັ້ມແຂງຂຶ້ນເລື້ອຍໆ, ໄດ້ເອົາໃຈໃສ່ຊີ້ນຳ ແລະ ປະຕິບັດລະບອບດຳເນີນຊີວິດຂອງໜ່ວຍພັກໃຫ້ເປັນປົກກະຕິ, ປັບປຸງເນື້ອໃນການດຳເນີນຊີວິດໂດຍສຸມໃສ່ການກວດກາຕີລາຄາຄຸນທາດການເມືອງ, ຄວາມຮັບຜິດຊອບ, ແບບແຜນວິທີເຮັດວຽກ ແລະ ປະຕິບັດໜ້າທີ່ທີ່ໄດ້ຮັບມອບໝາຍ, ການສ້າງແຜນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແມ່ນເນື້ອໃນຕົ້ນຕໍໃນການກໍ່ສ້າງພັກ, ປັບປຸງລະບອບສ່ອງແສງ ແລະ ຮັບປະກັນການຊີ້ນຳຢ່າງແທດເຖິງເຮັດໃຫ້ທຸກການເຄື່ອນໄຫວມີຄວາມເປັນເອກະພາບ ແລະ ໜັກແໜ້ນ.

ຈາກນັ້ນ, ສະຫາຍ ບຸນພັດ ສີສົມບັດ ກຳມະການໜ່ວຍພັກ, ເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານບົດສະຫຼຸບ ແລະ ແຜນຜັນຂະຫຍາຍການຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງໜ່ວຍພັກ ແລະ ສະຫາຍ ພັອ. ທຸມແພງ ອິນທະຈັກ ຮອງເລຂາໜ່ວຍພັກສະພາປະຊາຊົນແຂວງ ຜ່ານບົດສຳຫຼວດການນຳພາລວມຂອງໜ່ວຍພັກຄະນະພັກຕື່ມອີກ.

ໂອກາດນີ້, ສະຫາຍ ປອ. ບົວຄົງ ນາມມະວົງ ໄດ້ມີຄຳເຫັນໂອ້ລົມເນັ້ນໜັກໃຫ້ຄະນະພັກ-ສະມາຊິກພັກທຸກສະຫາຍ ເພື່ອໃຫ້ທິດນຳໃນການຈັດຕັ້ງປະຕິບັດວຽກງານບັນຫາທີ່ເຫັນວ່າຍັງຄົງຄ້າງ ເພື່ອໄປປັບປຸງແກ້ໄຂໃນຕໍ່ໜ້າໃຫ້ໄດ້ຮັບຜົນສຳເລັດ, ເສີມຂະຫຍາຍດ້ານດີສືບຕໍ່ປັບປຸງດ້ານອ່ອນຂໍ້ຄົງຄ້າງໃຫ້ສຳເລັດເປັນກ້າວໆ, ສືບຕໍ່ເອົາໃຈໃສ່ແກ້ໄຂວຽກງານທີ່ຍັງຄົງຄ້າງ, ເພື່ອເປັນບ່ອນອີງໃນການສືບຕໍ່ຈັດຕັ້ງປະຕິບັດວຽກງານທ້າຍສະໄໝໃຫ້ໄດ້ຮັບຜົນດີເທື່ອລະກ້າວ.

**(ນາງ ຂັນຖະໜອມ ແກ້ວມະນີ)**

# ທາບທາມຮ່າງກົດໝາຍ ຈຳນວນ 11 ສະບັບ

(ສພຊ) ໃນວັນທີ 9 ພຶດສະພາ 2023 ບັນດາສະພາປະຊາຊົນແຂວງ (ສພຂ) ທົ່ວປະເທດ ໄດ້ເຂົ້າຮ່ວມກອງປະຊຸມທາບທາມຮ່າງກົດໝາຍ ຈຳນວນ 11 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX (ໃນຮູບແບບອອນລາຍ) ໂດຍການເປັນເຈົ້າພາບຈັດກອງປະຊຸມ ຂອງສະພາແຫ່ງຊາດແລະເປັນປະທານກອງປະຊຸມ ໂດຍຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳວຽກງານກົດໝາຍ ສຳລັບຢູ່ທີ່ຫ້ອງປະຊຸມລັດວິສາຫະກິດສະຕາໂທລະຄົມນະຄອນຫຼວງວຽງຈັນ ເຊັ່ນ: ທີ່ຫ້ອງປະຊຸມລັດວິສາຫະກິດສະຕາໂທລະຄົມ ແຂວງຫຼວງນ້ຳທາ, ທ່ານ ກົງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງແຂວງຫຼວງນ້ຳທາ; ມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ ທີ່ກ່ຽວຂ້ອງເຂົ້າຮ່ວມ.



ສະພາປະຊາຊົນແຂວງ ຫຼວງນ້ຳທາ

ທີ່ສະພາປະຊາຊົນແຂວງສາລະວັນ, ທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ພ້ອມດ້ວຍສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ຕະຫຼອດຮອດພະນັກງານວິຊາການທີ່ກ່ຽວຂ້ອງພາຍໃນສະພາປະຊາຊົນແຂວງສາລະວັນ ແລະ ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເມືອງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຊີ້ແຈງຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃສ່ຮ່າງກົດໝາຍຈຳນວນ 11 ສະບັບຄື: ຮ່າງກົດໝາຍວ່າດ້ວຍການຈັດຫາງານ, ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ, ຮ່າງກົດໝາຍວ່າດ້ວຍການປົກຄອງ, ຮ່າງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ຮ່າງກົດໝາຍວ່າດ້ວຍການພິມຈຳໜ່າຍ, ຮ່າງກົດໝາຍວ່າດ້ວຍສາທາລະນະສຸກ, ຮ່າງກົດໝາຍວ່າດ້ວຍສານທະຫານ, ຮ່າງກົດໝາຍວ່າດ້ວຍສັດນ້ຳແລະການປະມົງ, ຮ່າງກົດໝາຍວ່າດ້ວຍສັດປ່າ, ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ, ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ.

ພ້ອມນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນສຸມໃສ່ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ເປັນຕົ້ນແມ່ນດ້ານໂຄງສ້າງ, ດ້ານເນື້ອໃນຕ່າງໆແຕ່ລະໝວດ, ແຕ່ລະມາດຕາຂອງແຕ່ລະກົດໝາຍ ຕະຫຼອດຮອດການຈັດຕັ້ງປະຕິບັດ ເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນສອດຄ່ອງກັບສະພາບເງື່ອນໄຂຕົວຈິງໃນແຕ່ລະໄລຍະ ແລະ ນຳເອົາຄຳຄິດເຫັນຂອງທຸກພາກສ່ວນເຂົ້າໃສ່ເນື້ອໃນຂອງຮ່າງກົດໝາຍດັ່ງກ່າວໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ ເພື່ອສາມາດນຳເອົາຮ່າງກົດໝາຍຈຳນວນ 11 ສະບັບດັ່ງກ່າວ ເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້.



ສະພາປະຊາຊົນແຂວງ ສາລະວັນ

# ສອບເສັງຄັດເລືອກເອົາລັດຖະກອນໃໝ່ ປະຈຳປີ 2023

(ສພຊ) ເມື່ອທ້າຍເດືອນເມສາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດຕັ້ງການສອບເສັງຄັດເລືອກເອົາລັດຖະກອນໃໝ່ ປະຈຳປີ 2023 ໂດຍການເປັນປະທານຂອງທ່ານ ທຸມເພັງ ຈອມວິສານ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ມີຕາງໜ້າຈາກຄະນະຈັດຕັ້ງແຂວງ, ຄະນະກວດກາແຂວງ, ພະແນກພາຍໃນແຂວງ, ຄະນະຊີ້ນຳການສອບເສັງ ແລະ ຄະນະວິຊາການຊ່ວຍວຽກການສອບເສັງພາຍໃນສະພາປະຊາຊົນແຂວງຜົ້ງສາລີ ແລະ ນັກສອບສອບເສັງເຂົ້າຮ່ວມ.



ໂດຍປະຕິບັດຕາມລະບຽບ, ຫຼັກການໃນການຈັດຕັ້ງການສອບເສັງຄັດເລືອກເອົາລັດຖະກອນໃໝ່ ປະຈຳປີ 2023 ແລະ ກ່ອນດຳເນີນການສອບເສັງ ທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນກ່າວຈຸດປະສົງ ແລະ ຜ່ານຂໍ້ຕົກລົງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳສອບເສັງ ແລະ ຄະນະວິຊາການຊ່ວຍວຽກການສອບເສັງລັດຖະກອນໃໝ່ ປະຈຳປີ 2023; ທ່ານ ຄຳມາ ສຸລິວົງ ຮອງເລຂາທິການສະພາປະຊາຊົນແຂວງ ຜູ້ຊີ້ນຳວຽກງານຈັດຕັ້ງ-ກວດກາ ຂຶ້ນຜ່ານກົດລະບຽບການສອບເສັງ; ຈາກນັ້ນ, ປະທານກອງປະຊຸມໄດ້ກ່າວເປີດພິທີສອບເສັງຢ່າງເປັນທາງການ ແລະ ດຳເນີນການສອບເສັງ ຕາມລະບຽບການ.



ຕາມການແບ່ງຕົວເລກລັດຖະກອນໃນປີ 2023 ສະພາປະຊາຊົນແຂວງຜົ້ງສາລີ ໄດ້ຮັບຕົວເລກລັດຖະກອນຈຳນວນ 1 ຕົວເລກ ເຊິ່ງການສອບເສັງຄັ້ງນີ້ ມີຜູ້ເຂົ້າຮ່ວມທັງໝົດ 9 ຄົນ ແລະ ສາມາດເລືອກໄດ້ບຸກຄົນທີ່ມີຄວາມຮູ້ຄວາມສາມາດ ແລະ ມີຄວາມເໝາະສົມທີ່ສຸດ ໄດ້ຮັບບັນຈຸເຂົ້າເປັນລັດຖະກອນ ປະຈຳປີ 2023.

**(ນາງ ສຸກສົມພອນ ແກ້ວແສງພະຈັນ)**

# ເຊື່ອມຊຶມເນື້ອໃນວຽກງານກໍ່ສ້າງພັກ-ພະນັກງານ



(ສພຊ) ສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມເຜີຍແຜ່, ເຊື່ອມຊຶມການຈັດຕັ້ງຜັນຂະຫຍາຍເນື້ອໃນວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງໃນທົ່ວແຂວງສະຫວັນນະເຂດ ປະຈຳປີ 2022, ໃນວັນທີ 15 ພຶດສະພາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານຄະນະປະຈຳສະພາປະຊາຊົນແຂວງ, ມີບັນດາທ່ານຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານປະທານຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານຮອງປະທານຄະນະກຳມະການ, ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານກ່ຽວກັບວຽກງານການຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ປະຈຳປີ 2022 ແລະ ທິດທາງປີ 2023 ຂອງຄະນະພັກຮາກຖານສະພາປະຊາຊົນແຂວງ ໂດຍທ່ານ ຄຳຜັນ ຄູນສະຫວັນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ບັນດາມະຕິ ແລະ ຄຳສັ່ງຂອງກົມການເມືອງສູນກາງພັກ ປະກອບມີ: ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 13/ກມສພ, ລົງວັນທີ 9 ກຸມພາ 2023 ວ່າດ້ວຍການເລືອກເຟັ້ນ, ແຕ່ງຕັ້ງ, ສັບປ່ຽນໜ້າທີ່ຂອງພະນັກງານນຳພາ-ຄຸ້ມຄອງ; ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 21/ກມສພ, ລົງວັນທີ 9 ກຸມພາ 2023 ວ່າດ້ວຍການຕີລາຄາພະນັກງານ; ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 268/ຄລສພ, ລົງວັນທີ 20 ມັງກອນ 2023 ວ່າດ້ວຍການດຳເນີນກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກແຕ່ລະຂັ້ນ ແລະ ຄຳສັ່ງແນະນຳສະບັບເລກທີ 25/ຄຈສພ, ລົງວັນທີ 24 ມັງກອນ 2023 ການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການດຳເນີນກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກແຕ່ລະຂັ້ນ.



# ກອງປະຊຸມວິສາມັນຄະນະປະຈຳສະພາປະຊາຊົນແຂວງ



(ສພຊ) ຕອນບ່າຍວັນພະຫັດທີ 11 ພຶດສະພາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ຄະນະປະຈຳສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມວິສາມັນຂອງຄະນະປະຈຳສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ມີທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກ ແລະ ວິຊາການຂະແໜງກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ, ທ່ານ ທອງໄຊ ທໍ່ຈົງເລ່ຍຈື ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ໄດ້ຜ່ານໜັງສືສະເໜີຂອງທ່ານເຈົ້າແຂວງວ່າດ້ວຍການພິຈາລະນາຮັບຮອງເອົາແຜນການລົງທຶນຂອງລັດ ປີ 2023 ແລະ ຜ່ານໜັງສືສະເໜີຂອງເຈົ້າແຂວງວ່າດ້ວຍການພິຈາລະນາຮັບຮອງເອົາແຜນການລົງທຶນ (ທຶນພັດທະນາຊຸມຊົນ) ປະຈຳປີ 2023. ຫຼັງຈາກນັ້ນ, ພະແນກການກ່ຽວຂ້ອງໄດ້ລາຍງານເພີ່ມເຕີມ ແລະ ຊີ້ແຈງບາງບັນຫາຕໍ່ກັບການມີຄຳຄິດຄຳເຫັນຂອງບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ ຢ່າງກົງໄປກົງມາ.

ປະທານກອງປະຊຸມ, ໄດ້ມີຄຳເຫັນຊີ້ນຳ ແລະ ເນັ້ນໜັກໃຫ້ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສືບຕໍ່ຄົ້ນຄວ້າຮ່ວມກັບພະແນກແຜນການໃຫ້ລະອຽດ ເພື່ອຄວາມເປັນເອກະພາບ ແລ້ວລາຍງານຕໍ່ປະທານສະພາປະຊາຊົນແຂວງ, ເພື່ອພິຈາລະນາຮັບຮອງ. ພ້ອມນັ້ນ, ກອງປະຊຸມຍັງໄດ້ປະກອບຄຳເຫັນ ແລະ ປຶກສາຫາລືວຽກງານພົ້ນເດັ່ນອື່ນໆ ອີກຈຳນວນໜຶ່ງ.

**(ແສງພອນ ອິນນະລົງ)**

# ຊຸກຍູ້ວຽກງານພະແນກການເງິນ ນະຄອນຫຼວງວຽງຈັນ



(ສພຊ) ໃນວັນທີ 16 ພຶດສະພາ 2023 ທ່ານ ນາງ ພຶດສະໄໝ ຕົ້ນສະຫວັນ ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະໄດ້ເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2023 ຢູ່ພະແນກການເງິນ ນະຄອນຫຼວງວຽງຈັນ (ນວ) ໂດຍການຕ້ອນຮັບຂອງທ່ານ ນາງ ພວງສີ ເພົ້າລາວັນ ຮອງຫົວໜ້າພະແນກການເງິນ ນວ ແລະ ມີບັນດາຫົວໜ້າ-ຮອງຫົວໜ້າຂະແໜງການຂອງພະແນກ ແລະ ວິຊາການເຂົ້າຮ່ວມ.

ການເຄື່ອນໄຫວຄັ້ງນີ້, ທ່ານ ນາງ ພວງສີ ເພົ້າລາວັນ ຮອງຫົວໜ້າພະແນກການເງິນ ໄດ້ລາຍງານໃຫ້ຮູ້ວ່າ: ໃນໄລຍະຕົ້ນປີຜ່ານມາ ການຈັດຕັ້ງແຜນງົບປະມານແມ່ນໄດ້ອີງໃສ່ບັນດານິຕິກຳຂອງຂັ້ນເທິງ ໃນການຈັດຕັ້ງຜັນຂະຫຍາຍ ເປັນຕົ້ນແມ່ນມະຕິຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ສະບັບເລກທີ 005/ສປນວ, ລົງວັນທີ 10 ກຸມພາ 2023; ຄຳແນະນຳຂອງກະຊວງການເງິນ ແລະ ຄຳແນະນຳຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານນະຄອນຫຼວງວຽງຈັນ ປະຈຳປີ 2023 ໂດຍສະເພາະສຸມໃສ່ການຈັດຕັ້ງປະຕິບັດບັນດາມາດຕະການທີ່ຕິດພັນກັບວາລະແຫ່ງຊາດ ຕາມຂໍ້ຕົກລົງຂອງທ່ານເຈົ້າຄອງ ສະບັບເລກທີ 856/ຈນວ, ລົງວັນທີ 1 ພະຈິກ 2021 ແລະ ບົດບັນທຶກສະບັບຄັ້ງວັນທີ 23 ມີນາ 2022 ທີ່ຮອງລັດຖະມົນຕີກະຊວງການເງິນ ໄດ້ເຊັນຮ່ວມກັບຮອງເຈົ້າຄອງນະຄອນຫຼວງວຽງຈັນ.

ໂດຍອີງໃສ່ບັນດາເນື້ອໃນເອກະສານດັ່ງກ່າວ, ການຈັດຕັ້ງປະຕິບັດແຜນງົບປະມານ 6 ເດືອນຕົ້ນປີ 2023 ດ້ານລາຍຮັບ ປະຕິບັດໄດ້ 2.569,96 ຕື້ກີບ ເທົ່າກັບ 44,40% ຂອງແຜນປີ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 48,28% ເປັນເງິນເທົ່າກັບ 836,79 ຕື້ກີບ. ດ້ານລາຍຈ່າຍທັງໝົດ 242,38 ຕື້ກີບ ເທົ່າກັບ 40,88% ຂອງແຜນປີ, ສົມທຽບກັບໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 5,06% (ບໍ່ລວມລາຍຈ່າຍເງິນລົງທຶນຂອງລັດປົກກະຕິ) ເຊິ່ງສາມາດປະຕິບັດຄວາມດຸ່ນດ່ຽງໄດ້260,79 ຕື້ກີບ ເທົ່າກັບ 26,20% ຂອງແຜນການປີ. ຄຽງຄູ່ກັບການລາຍງານຜົນສຳເລັດນັ້ນ ກໍໄດ້ຮັບຟັງບາງຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ເປັນຕົ້ນແມ່ນບັນຫາສະພາບການປ່ຽນແປງຂອງເງິນຕາທີ່ຜັນຜວນ, ອັດຕາແລກປ່ຽນຂອງເງິນຕາຕ່າງປະເທດສູງ ເຊິ່ງເປັນປັດໄຈໜຶ່ງທີ່ສ້າງຜົນກະທົບໃຫ້ຜູ້ປະກອບການ ແລະ ການລົງທຶນ ເຮັດໃຫ້ມີຜົນກະທົບຕໍ່ກັບຜົນກຳໄລ ແລະ ການປະຕິບັດພັນທະໃຫ້ລັດບໍ່ທັນໄດ້ເຕັມເມັດເຕັມໜ່ວຍ; ບັນຫາຈາກບັນດາບໍລິສັດທີ່ແຈ້ງເສຍອາກອນດ້ວຍຕົນເອງ ສ່ວນໃຫຍ່ແຈ້ງແຕ່ອາກອນເງິນເດືອນ ແລະ ແຈ້ງອາກອນມູນຄ່າເພີ່ມຂ້ອນຂ້າງຕໍ່າ ແລະ ບັນຫາທີ່ຜູ້ປະກອບການຈຳນວນໜຶ່ງຍັງບໍ່ມີຄວາມຕື່ນຕົວ ເປັນເຈົ້າການປະຕິບັດໜ້າທີ່ການມອບພັນທະຂອງຕົນຕາມກຳນົດເວລາ. ນອກນັ້ນ ຍັງໄດ້ຮັບຟັງການຊີ້ແຈງຂອງພະແນກການເງິນ ນວ ຕໍ່ຄຳຖາມເຈາະຈີ້ມຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ໃນການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023, ຊີ້ແຈງຕໍ່ຄຳສະເໜີຂອງປະຊາຊົນ ໃນບັ້ນລົງພົບປະຜູ້ມີສິດເລືອກຕັ້ງ ແລະ ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ, ແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023 ຂອງພະແນກດັ່ງກ່າວ.

ຕອນທ້າຍ, ຄະນະໄດ້ມີຄຳເຫັນແລກປ່ຽນ ແລະ ຮັບເອົາບາງບັນຫາ, ຂໍ້ຫຍຸ້ງຍາກທີ່ຄະນະຮັບຜິດຊອບໃນຂະແໜງການຕ່າງໆ ເພື່ອນຳສະເໜີຕໍ່ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ ແລະ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ພະແນກການທີ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຫ້າວຫັນ ໃຫ້ສືບຕໍ່ເອົາໃຈໃສ່ປະຕິບັດບັນດາຄາດໝາຍ ແລະ ທິດທາງໃນ 6 ເດືອນທ້າຍປີ 2023 ທີ່ກຳນົດໄວ້ໃຫ້ສຳເລັດບັນລຸຄາດໝາຍ.

SCNG
SOMCHAYNEUK GROUP

## ລະນຶກວິລະກຳ...

(ຕໍ່ຈາກໜ້າ 1)

ຄວາມສ່ຽງທີ່ສຸດ, ຜູ້ໃດຈະຄິດວ່າຈະເປັນໄປໄດ້ ເພາະວ່າຄຸກທີ່ສ້າງຂຶ້ນສະເພາະຄຸມຂັງບັນດາຜູ້ນຳ ແມ່ນຕັ້ງຢູ່ຂອບເຂດໃຈກາງນະຄອນຫຼວງວຽງຈັນ, ເປັນຄຸກທີ່ແໜ້ນໜາທີ່ສຸດ, ແຕ່ລະຫ້ອງຄຸມຂັງໃສ່ກະແຈເຂົາຄວາມຢ່າງດີ, ມີສາລະວັດທະຫານຂອງຝ່າຍວຽງຈັນ ກຸ່ມຜະເດັດການລູກມືຂອງຈັກກະພັດໂຕໃໝ່ ໜຶ່ງກອງຮ້ອຍຜັດປ່ຽນກັນເຂົ້າເວນຍາມ ເຝົ້າລະວັງຢູ່ແຕ່ລະຫ້ອງ, ເວນຍາມຕະຫຼອດ 24 ຊົ່ວໂມງ. ອ້ອມຮອບຄຸກມີຮົ້ວໜາມຈັບ 7 ຮາວ ໜຶ່ງຊັ້ນ, ຮົ້ວແອ້ມດ້ວຍສັງກະສີສູງປະມານ 2-3 ແມັດ ໜຶ່ງຊັ້ນ, ມີດອກໄຟສະປອດໄລ້ເບິ່ງທັງ 4 ດ້ານ, ມີໝວດທະຫານລົດອາແອມ 2 ຄັນ ຍາມປະຕູຄຸກ ປືນປາຍປືນເຂົ້າໃສ່ເຮືອນຄຸມຂັງ ຢູ່ໃນທ່າກຽມພ້ອມຕະຫຼອດ 24 ຊົ່ວໂມງ. ໃນວົງຄ້າຍໂພນເຄັງ ຍັງມີເຮືອນຄອບຄົວຂອງນາຍ ແລະ ພົນທະຫານ ພ້ອມດ້ວຍກອງບັນຊາການຮັບຜິດຊອບກຳລັງທະຫານ, ຕຳຫຼວດ, ສາລະວັດທະຫານເວນຍາມຄຸກ. ວົງນອກຂອງຄ້າຍໂພນເຄັງ ມີກຳລັງກອງປ້ອງກັນໜຶ່ງກອງຮ້ອຍ ປະຕິບັດໜ້າທີ່ສາລະເວ ແລະ ເວນຍາມເປັນປະຈຳ ເຊິ່ງພວກເຂົາຖືວ່າຮັບປະກັນຮ້ອຍເປີເຊັນ.

ຢ່າງໃດກໍຕາມ, ດ້ວຍການວາງແນວທາງອັນຖືກຕ້ອງ ແລະ ເປັນທຳຂອງພັກ, ການນຳພາອັນສະຫຼາດສ່ອງໃສຂອງສູນກາງພັກ ປະຊາຊົນ ປະຕິວັດລາວ ບວກກັບຄວາມປີຊາສາມາດ ແລະ ໄຫວພິບຂອງບັນດາຜູ້ນຳໃນຄຸກໂພນເຄັງໃນເວລານັ້ນ ໂດຍໄດ້ມີວິທີການປຸກລະດົມຂົນຂວາຍຍາດແຍ່ງເອົາກຳລັງ ຕຳຫຼວດ, ທະຫານ, ສາລະວັດທະຫານ ທີ່ມາຍາມຄຸກ ເຊິ່ງເປັນການປຸກລຸກນໍ້າໃຈຮັກຊາດ ໃນກະໂຕຂອງເຂົາເຈົ້າເອງ ໃຫ້ອ່ຽງມາເປັນກຳລັງປະຕິວັດ ກຳລັງທີ່ຮັກຊາດອັນແທ້ຈິງ ກຳລັງທີ່ຕໍ່ສູ້ເພື່ອປົດປ່ອຍປະເທດຊາດ ຈາກລັດຖະບານຫຸ່ນ ຈາກຈັກກະພັດໂຕໃໝ່ ທີ່ຮຸກຮານ ແລະ ຈາກການກົດຂີ່ຂູດຮີດ. ຕໍ່ກັບເຫດການດັ່ງກ່າວ, ຜູ້ນຳເຮົາ ໄດ້ໃຊ້ຫຼາຍວິທີເພື່ອຂົນຂວາຍ ໂດຍເລີ່ມແຕ່ຕໍ່າຫາສູງ, ຈາກບຸກຄົນ ດ້ວຍການຫາວິທີໂອ້ລົມຄົນຕໍ່ຄົນ ເພື່ອໂຄສະນາປຸກລະດົມຍົກໃຫ້ເຫັນເຖິງການກະທຳຕົວຈິງ ທີ່ໄດ້ມີການກົດຂີ່ຂູດຮີດ ອັນຖືກກັບສະພາບຕົວຈິງທີ່ຄອບຄົວພີ່ນ້ອງຂອງບັນດາສາລະວັດທະຫານກຳລັງປະເຊີນຢູ່ໃນເວລານັ້ນ ແລະ ໄດ້ຍົກໃຫ້ເຫັນເຖິງແນວທາງອັນໃສແຈ້ງໃນການປົດປ່ອຍປະເທດຊາດ ລວມທັງອຸດົມການອັນໜັກແໜ້ນ ບໍ່ມີມື້ປ່ຽນແປງຂອງພັກ ທີ່ຈະນຳພາປະຊາຊົນຫຼຸດພົ້ນຈາກການກົດຂີ່ຂູດຮີດ ເຮັດໃຫ້ປະຊາຊົນຢູ່ດີກິນດີ ມີຄວາມຈະເລີນຮຸ່ງເຮືອງ; ພ້ອມດຽວກັນນີ້, ກໍໄດ້ໝູນໃຊ້ວັດທະນະທຳ,ຮີດຄອງປະເພນີ, ຈິດຕະສາດ... ເຊິ່ງໄດ້ເຮັດໃຫ້ແນວຄິດຂອງບັນດາຕຳຫຼວດ, ທະຫານ, ສາລະວັດທະຫານ ມີການຫັນປ່ຽນມາມີຄວາມຮັກຄວາມແພງ, ເຊື່ອຖື, ນັບຖືຜູ້ນຳຢູ່ໃນຄຸກ ອັນໄດ້ເປັນການປຸກລຸກຈິດໃຈຮັກຊາດ ເຮັດໃຫ້ເຂົາເຈົ້າມີຄວາມຮູ້ສຶກຕື່ນຕົວ, ມີນໍ້າໃຈຮັກຊາດອັນແຮງກ້າ, ຍອມເສຍສະຫຼະທຸກສິ່ງທຸກຢ່າງຕະຫຼອດຊີວິດເພື່ອຊາດ, ເຂົ້າຮ່ວມການປະຕິວັດ, ຮ່ວມກັບກຳລັງແນວລາວຮັກຊາດ ແລະ ຈົ່ງຮັກພັກດີ, ຊື່ສັດຕໍ່ຜູ້ນຳສຸດຂີດ ກາຍເປັນຜູ້ໄຂປະຕູຫ້ອງຄຸມຂັງແຕ່ລະຫ້ອງ, ໄຂປະຕູຄຸກ ແລ້ວຕັດສິນໃຈປ້ອງກັນ ແລະ ພາຜູ້ນຳພັກ, ແນວລາວຮັກຊາດ ອອກຈາກຄຸກໂພນເຄັງຢ່າງມີຄວາມປອດໄພ, ພ້ອມກັບຜູ້ນຳຂອງພວກເຮົາສ້າງວິລະກຳອັນມະຫັດສະຈັນຂຶ້ນ ດ້ວຍນໍ້າໃຈເສຍສະຫຼະຢ່າງພິລະອາດຫານ ເຊິ່ງບໍ່ເຄີຍມີມາກ່ອນໃນປະຫວັດສາດ ເຊິ່ງໄດ້ພາກັນຍ່າງອອກຈາກຄຸກຜ່ານປະຕູຄຸກ, ຜ່ານປາຍປືນລົດອາແອມ 2 ຄັນ ທີ່ກຽມພ້ອມສັງຫານຢູ່ປາກປະຕູຄຸກ, ຜ່ານຮົ້ວກຳແພງ ແລະ ກອງປ້ອງກັນຄ້າຍໂພນເຄັງ ອອກໄປຢ່າງສະຫງ່າຜ່າເຜີຍ ແລະ ປອດໄພ ໂດຍທີ່ກຳລັງໝວດລົດອາແອມ, ນາຍທະຫານ ແລະ ກອງບັນຊາການ ພ້ອມດ້ວຍຜູ້ປະຈຳການ ກໍບໍ່ຮູ້ເມື່ອຄືງ.

ບົດຮຽນການຂົນຂວາຍຂອງບັນດາຜູ້ໃນເຮົາ ໃນການແຫກຄຸກໂພນເຄັງ ກາຍເປັນອີກໜຶ່ງບົດຮຽນທີ່ລໍ້າຄ່າ, ເປັນບົດຮຽນທີ່ສຳຄັນ ເພື່ອໝູນໃຊ້ເຂົ້າໃນການປຸກລະດົມຂົນຂວາຍ ບໍ່ສະເພາະແຕ່ຂົນຂວາຍກຳລັງກົງກັນຂ້າມເທົ່ານັ້ນ, ແຕ່ຍັງເປັນບົດຮຽນທີ່ສຳຄັນໃນການຂົນຂວາຍປວງຊົນລາວທັງຊາດ ໃຫ້ມີນໍ້າໃຈຮັກຊາດອັນດູດດື່ມ. ໃນໂອກາດວັນທີ່ມີຄວາມໝາຍຄວາມສຳຄັນຂອງປະຫວັດສາດຊາດລາວ ອີກວັນໜຶ່ງ ວັນທີ 24 ພຶດສະພາ 1960 ວັນທີ່ໄດ້ມີວິລະກຳແຫກຄຸກ ຄັ້ງມະຫັດສະຈັນ ຄົບຮອບ 63 ປີ ພວກເຮົາຈົ່ງພ້ອມກັນລະນຶກເພື່ອກຳໃຫ້ໄດ້ບົດຮຽນອັນລໍ້າຄ່າໝູນໃຊ້ເຂົ້າໃນການປຸກລະດົມຂົນຂວາຍຍົກສູງນໍ້າໃຈຮັກຊາດ ໃນທົ່ວປວງຊົນລາວ ໃຫ້ພ້ອມກັນສືບທອດພາລະກິດປະຕິວັດ ໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ກ້າວຂຶ້ນຕາມເສັ້ນທາງສັງຄົມນິຍົມ, ເຮັດໃຫ້ປະເທດຊາດຂອງພວກເຮົາ ມັ່ງຄັ່ງເຂັ້ມແຂງ, ປະຊາຊົນມີຄວາມຜາສຸກ, ສັງຄົມມີຄວາມສີວິໄລ ແລະ ຍຸຕິທຳ ເຊິ່ງເປັນອຸດົມການລວມຂອງພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ.




## ກົດໝາຍວ່າດ້ວຍ ການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ

**ມາດຕາ 50 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານເງິນຕາຕ່າງປະເທດ ມີເນື້ອໃນດັ່ງນີ້:

1. ການປະຕິບັດກົດໝາຍກ່ຽວກັບການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
2. ການປະຕິບັດສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ລວມທັງການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ຜູ້ລະເມີດ;
3. ການເຄື່ອນໄຫວໃຫ້ບໍລິການເງິນຕາຕ່າງປະເທດ;
4. ເນື້ອໃນອື່ນທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 51 (ປັບປຸງ) ຮູບການການກວດກາ**

ການກວດກາວຽກງານຄຸ້ມຄອງເງິນຕາຕ່າງປະເທດ ມີສາມຮູບການດັ່ງນີ້:

1. ການກວດກາຕາມລະບົບເປັນປົກກະຕິ ເຊິ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ເຊິ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ເຊິ່ງຕ້ອງແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ເຊິ່ງແມ່ນການກວດກາໂດຍຮີບດ່ວນ, ບໍ່ໄດ້ແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານດັ່ງກ່າວ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

**ພາກທີ VIII**

**ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**ມາດຕາ 52 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

ອ່ານຕໍ່ສະບັບໜ້າ

## ວິທີເຮັດວຽກ




**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ**

**ກ) ມາລະຍາດຂອງສະມາຊິກຂອງພັກເຮົາ ທີ່ເຮັດການປະຕິວັດຢ່າງແທ້ຈິງ.**

1. ພັກເຮົາ ບໍ່ແມ່ນການຈັດຕັ້ງອັນທີ່ເຮັດໃຫ້ສະມາຊິກເປັນອາດຍາເຈົ້ານາຍລວຍ. ມັນແມ່ນການຈັດຕັ້ງອັນໜຶ່ງ ທີ່ເຮັດໜ້າທີ່ປົດປ່ອຍຊາດ, ເຮັດໃຫ້ປະເທດຊາດຮັ່ງມີ, ໃຫ້ພີ່ນ້ອງຮ່ວມຊາດສະໜຸກສະບາຍ.
2. ພະນັກງານຂອງພັກ ຕ້ອງເຂົ້າໃນທິດສະດີປະຕິວັດໃຫ້ຄັກ, ຕ້ອງເຮັດໃຫ້ທິດສະດີ ແລະ ພາກປະຕິບັດເດີນຄຽງຄູ່ກັນເລື້ອຍໆ.
3. ເວລາອອກຄຳຂວັນ ແລະ ຄຳສັ່ງ ຕ້ອງອີງໃສ່ເງື່ອນໄຂຕົວຈິງ ແລະ ອີງໃສ່ບົດຮຽນການປະຕິວັດຂອງປະເທດຕ່າງໆ ຂອງພາຍໃນປະເທດ ແລະ ຂອງທ້ອງຖິ່ນທີ່ກ່ຽວຂ້ອງນັ້ນເລື້ອຍໆ.
4. ຕ້ອງອາໄສໃນໝູ່ປະຊາຊົນເລື້ອຍໆ ເພື່ອກວດກາເບິ່ງວ່າ ຄຳຂວັນ ຫຼື ຄຳສັ່ງທີ່ອອກໄປນັ້ນຖືກ ຫຼື ບໍ່?.
5. ຕ້ອງໝັ່ນກວດກາຄືນ ເບິ່ງວຽກການຂອງພັກໝົດທຸກອັນຢູ່ເລື້ອຍໆ. ວຽກການທີ່ພັກເຮົາເຮັດອອກໄປທຸກອັນ ຕ້ອງຕັ້ງຢູ່ໃນຝ່າຍປະຊາຊົນສະເໝີ, ຕ້ອງນຳເອົານໍ້າໃຈຮັກຊາດ, ນໍ້າໃຈດຸໝັ່ນ, ປະຢັດສັດທ່ຽງ ມາສັ່ງສອນອົບຮົມພະນັກງານ, ສະມາຊິກຂອງພັກເຮົາ ແລະ ປະຊາຊົນ.
6. ວຽກການຂອງພັກແຕ່ລະອັນ ຕ້ອງຮັກສາຫຼັກການ ແລະ ຕ້ອງປະສົມປະສານຢ່າງໃກ້ຊິດກັບປະຊາຊົນ, ຖ້າບໍ່ເປັນດັ່ງນັ້ນ ມັນຈະບໍ່ພຽງແຕ່ນຳພາປະຊາຊົນບໍ່ໄດ້, ແຕ່ມັນຍັງຈະພາໃຫ້ຮໍ່າຮຽນນຳປະຊາຊົນບໍ່ໄດ້, ບໍ່ພຽງແຕ່ຈະບໍ່ຍົກຍໍລະດັບຄວາມຕື່ນຕົວຂອງປະຊາຊົນຂຶ້ນໄດ້, ແຕ່ມັນຍັງຈະພາບໍ່ໃຫ້ເຮົາຮູ້ຈັກຄຳຄິດຄຳເຫັນ ຂອງປະຊາຊົນອີກດ້ວຍ.

ອ່ານຕໍ່ສະບັບໜ້າ...




# ບຸນບັ້ງໄຟຜູກພັນກັບການກະເສດ

\# ດົ້ນກິບເມກ



ຫຼັງຈາກບຸນພະເຫວດ, ບຸນວິສາຂະບູຊາແລ້ວ ປະເພນີລາວກໍຕົກມາໃສ່ບຸນບັ້ງໄຟ ເຊິ່ງໃກ້ຍາມເຮັດນາ ຄົນລາວຈະເຮັດບຸນບັ້ງໄຟ ເພື່ອຂໍຝົນ ເຊິ່ງບຸນປາງນີ້ ມັນໄດ້ເຊື່ອງຊ້ອນແງ່ຄິດຄະຕິຊີວິດໄວ້ຫຼາຍປະການ ແລະ ມີຜູ້ໃຫ້ແງ່ຄິດແຕກຕ່າງກັນໄປຕາມຄວາມເຂົ້າໃຈໃຜມັນ ຕາມຄະຕິລາວເດີມ ບຸນບັ້ງໄຟແມ່ນເພື່ອບູຊາພະຍາແຖນ ເພື່ອຂໍຝົນ ເພາະມັນຮອດຍາມເຮັດນາ.

ດັ່ງນັ້ນ, ບຸນບັ້ງໄຟຄະຕິລາວເດີມ ຈຶ່ງມຸ່ງເຮັດເພື່ອຈຸດໝາຍ ຂໍນ້ຳຝົນເຮັດການກະເສດປູກຝັງ ເພາະພື້ນຖານການດຳລົງຊີວິດແບບລາວເຮົາໄດ້ອີງໃສ່ການກະເສດເປັນຫຼັກ, ການປູກພືດຜັກເຮັດສວນ, ເຮັດນາ ຍ່ອມອາໄສນ້ຳ ເພາະວ່າມີດິນປູກກິນກວ້າງຂວາງ ແຕ່ລະຄອບຄົວ ມີສວນມີນາ ແຕ່ລະຄົນແມ່ນຂະຫຍັນທຳມາຫາກິນ, ບຸນບັ້ງໄຟ ຍັງເປັນຮູບແບບການຫຼິ້ນມ່ວນຊື່ນ ຕ່າງຈາກບຸນປາງອື່ນເຊັ່ນ: ຖ້າວ່າບັ້ງໄຟ ໃຜຈູດບໍ່ຂຶ້ນແມ່ນຫາມກັນລົງຂີ້ຕົມ ແລະ ສິ່ງປະກອບປະເພດນ້ຳເມົາ ກໍແມ່ນເຫຼົ້າສາໂທພື້ນບ້ານ ສ່ວນວ່າຂອງແກ້ມມີຊີ້ນແຫ້ງ-ປາຢ້າງ ຂຶ້ນກັບແຕ່ລະທ້ອງຖິ່ນ ສຳຄັນແມ່ນການຫຼິ້ນມ່ວນຊື່ນໃຫ້ຈິດໃຈຂອງທຸກຄົນເບີກບານ ກ່ອນເຂົ້າສູ່ຍາມເຮັດນາ.

**ຂໍ້ສັງເກດຕໍ່ມາ:** ແມ່ນການຫຼິ້ນຂອງເພີເປີເປື້ອນ ກໍແມ່ນບຸນບັ້ງໄຟ ຕ່າງກັບບຸນປີໃໝ່ທີ່ໃຊ້ນ້ຳສະອາດຫົດສົງກັນ, ຄູບາອາຈານບາງທ່ານຈຶ່ງເວົ້າໄວ້ໜ້າຄິດອັນໜຶ່ງວ່າ: ບຸນບັ້ງໄຟແມ່ນບຸນເປື້ອນ ຕ້ອງບໍ່ຖືສາກັນ ເພາະຈຸດໝາຍນອກຈາກຈູດບັ້ງໄຟຂໍຝົນເຮັດນາແລ້ວ ແມ່ນຍັງເພື່ອສ້າງກຳລັງໃຈ-ກຽມພ້ອມຮ່າງກາຍສູ່ວຽກງານກະເສດ.

**ສັງລວມໄດ້ວ່າ:** ມີບາງປາງບຸນຂອງລາວ ທີ່ຢາກບອກເຖິງຄວາມສຳຄັນຂອງການກະເສດ ປູກຝັງຕ້ອງໄດ້ລໍລະດູການ, ເຮັດນາ ເຮັດສວນ ຕ້ອງໄດ້ໃຊ້ນ້ຳ, ວິຖີຊີວິດຄົນລາວຈຶ່ງຜູກພັນກັບນ້ຳ ແລະ ປ່າ, ຜືນດິນອຸດົມສົມບູນ; ໃນນ້ຳມີປາ ໃນນາມີເຂົ້າ ຖ້າວ່າໃຊ້ປຸຍ-ໃຊ້ເຄມີ ບັນດາທຳມະຊາດພືດພັນ, ປູປາກໍຫົດຫາຍໜ້າເສຍດາຍ!



# ຂຽນຄຳລາວໃຫ້ຖືກ

\#ຄູແສງ

## ນັກ ແລະ ກອນ

**"ນັກ"** ເປັນໜ່ວຍຄຳບໍ່ເອກະລາດ ຕ້ອງໃຊ້ປະກອບໜ້າຄຳອື່ນ ດັ່ງນີ້:

- ໃຊ້ປະກອບໜ້າຄຳອື່ນ ໝາຍເຖິງ ຜູ້ ເຊັ່ນ ນັກຮຽນ, ນັກສຶກສາ, ນັກຂັບຂີ່...
- ໃຊ້ປະກອບໜ້າຄຳອື່ນ ໝາຍເຖິງ ຜູ້ມັກ ເຊັ່ນ ນັກດື່ມ, ນັກກິນ, ນັກທ່ຽວ...
- ໃຊ້ປະກອບໜ້າຄຳອື່ນ ໝາຍເຖິງ ຜູ້ຊຳນານ ເຊັ່ນ ນັກວິຊາການ, ນັກເທດ, ນັກສືບ...
- ໃຊ້ປະກອບໜ້າຄຳອື່ນ ໝາຍເຖິງ ຜູ້ມີອາຊີບໃດໜຶ່ງ ເຊັ່ນ ນັກກົດໝາຍ, ນັກການເມືອງ, ນັກສະແດງ...

**"ກອນ"** ໝາຍເຖິງ "ຜູ້ເຮັດຜູ້ທຳ" ໃຊ້ປະກອບເປັນສ່ວນຫຼັງຂອງຄຳສະໝາດ ທີ່ໄດ້ເຄົ້າມາຈາກພາສາປາລີ-ສັນສະກິດ ເຊັ່ນ ກຳມະກອນ (ຊາວຜູ້ອອກແຮງງານ), ກະສິກອນ (ຜູ້ເຮັດການປູກຝັງ), ພິທີກອນ (ຜູ້ດຳເນີນລາຍການໃນພິທີ), ຈິດຕະກອນ (ຊ່າງແຕ້ມຮູບ), ວິທະຍາກອນ (ນັກວິຊາການ), ສຳມະນາກອນ (ຜູ້ເຂົ້າຮ່ວມສຳມະນາ), ວິສະວະກອນ (ຜູ້ເຮັດວຽກວິສະວະກຳ)...

\#ຂໍ້ສັງເກດ: ໄລຍະຜ່ານມາ ປາກົດມີຄົນນຳເອົາຄຳວ່າ **"ນັກ"** ມາປະກອບໜ້າຄຳທີ່ລົງທ້າຍດ້ວຍ **"ກອນ"** ເຊັ່ນ ວິທະຍາກອນ ເປັນ ນັກວິທະຍາກອນ, ສຳມະນາກອນ ເປັນ ນັກສຳມະນາກອນ ເຊິ່ງຖືວ່າເປັນການໃຊ້ຄຳທີ່ບໍ່ຖືກຕ້ອງ.

| ຖືກ | ຜິດ |
|---|---|
| ພິທີກອນ | ນັກພິທີກອນ |
| ຈິດຕະກອນ | ນັກຈິດຕະກອນ |
| ວິສະວະກອນ | ນັກວິສະວະກອນ |
| ວິທະຍາກອນ | ນັກວິທະຍາກອນ |
| ສຳມະນາກອນ | ນັກສຳມະນາກອນ |

# ສິດທິຂອງເດັກ ໃນເວທີສາກົນ

ປີ 1955 ໄດ້ມີຖະແຫຼງການສາກົນ ວ່າດ້ວຍສິດທິເດັກຂຶ້ນ ໂດຍອົງການສະຫະປະຊາຊາດ ເຮັດໃຫ້ທົ່ວໂລກຕື່ນຕົວ ແລະ ເຫັນດີເປັນເອກະພາບວ່າ ຄວນໃຫ້ຄວາມສຳຄັນແກ່ເດັກນ້ອຍໃນປະເທດຂອງຕົນໃຫ້ຫຼາຍຂຶ້ນ ການຕອບຮັບຕໍ່ຖະແຫຼງການດັ່ງກ່າວ ເປັນໄປຢ່າງກວ້າງຂວາງ ແລະ ໃນປີດຽວກັນ ປະເທດຕ່າງໆໃນໂລກ ກໍໄດ້ຈັດໃຫ້ມີວັນເດັກນ້ອຍໃນປະເທດຂອງຕົນ ໂດຍມີຈຸດປະສົງເພື່ອເປັນການຊຸກຍູ້ໃຫ້ທຸກປະເທດຄຸ້ມຄອງສິດໃນຊີວິດ, ສຸຂະພາບ ແລະ ສິດດ້ານການສຶກສາຂອງເດັກແລະເປັນການສະເຫຼີມສະຫຼອງໃຫ້ແກ່ເດັກນ້ອຍໃນທົ່ວໂລກເພາະວ່າເດັກນ້ອຍທຸກຄົນເກີດມາພ້ອມສິດຕ່າງໆ ເລີ່ມຕັ້ງແຕ່ສິດທີ່ຈະມີຊີວິດດ້ວຍຄວາມປອດໄພ, ມີສຸຂະພາບແຂງແຮງສົມບູນ, ໄດ້ຮັບການສຶກສາ ແລະ ການພັດທະນາຕາມໄວ ຕະຫຼອດຈົນຮອດການໄດ້ຮັບການປົກປ້ອງຄຸ້ມຄອງຈາກອັນຕະລາຍ,ການຖືກລະເມີດ ແລະ ສະແຫວງຫາຜົນປະໂຫຍດ; ສະນັ້ນ, ວັນເດັກນ້ອຍ ຈຶ່ງບໍ່ເປັນພຽງແຕ່ວັນທີ່ໃຫ້ຄວາມສຳຄັນແກ່ເດັກນ້ອຍເທົ່ານັ້ນ ຫາກເປັນມື້ທີ່ເຮັດໃຫ້ຜູ້ຄົນເຫັນໄດ້ເຖິງຄວາມສຳຄັນຂອງເດັກນ້ອຍວ່າເດັກນ້ອຍໃນມື້ນີ້ ຄືຜູ້ໃຫຍ່ໃນວັນໜ້າ ທີ່ຈະຕ້ອງໄດ້ພັດທະນາປະເທດຊາດຕໍ່ໄປ ຫາກປ່ອຍປະລະເລີຍໃຫ້ຖືກລະເມີດສິດ, ຢູ່ໃນສະພາບແວດລ້ອມທີ່ບໍ່ເໝາະສົມ, ໄດ້ຮັບການພັດທະນາທີ່ບໍ່ຖືກຕ້ອງ ກໍຈະກາຍເປັນຮອຍຕຳນິທີ່ຝັງຮາກລົງເລິກແກ້ໄຂບໍ່ໄດ້ຈົນຮອດລູກຫຼານ.

ຖະແຫຼງການສາກົນ ວ່າດ້ວຍສິດທິເດັກ ແລະ ເຍົາວະຊົນ ຂອງອົງການສະຫະປະຊາຊາດ ໄດ້ກ່າວໄວ້ວ່າ:

1. ເດັກ ແລະ ເຍົາວະຊົນ ຕ້ອງໄດ້ຮັບສິດເທົ່າທຽມກັນ ໂດຍປາສະຈາກການແບ່ງແຍກ ຫຼື ຂັດຂວາງ ບໍ່ວ່າດ້ວຍວິທີໃດກໍຕາມ ບໍ່ວ່າຈະເປັນເຊື້ອຊາດ, ສາສະໜາ, ຄວາມຄິດເຫັນທາງການເມືອງ, ຊົນເຜົ່າ ຫຼື ສັງຄົມ, ຊັບສິນ, ການກຳເນີດ ຫຼື ສະຖານະອື່ນໆ ຂອງເດັກ ຫຼື ຄອບຄົວເດັກກໍຕາມ;

2. ເດັກ ແລະ ເຍົາວະຊົນ ຕ້ອງໄດ້ຮັບການປົກປ້ອງຄຸ້ມຄອງເປັນພິເສດທີ່ຊ່ວຍໃຫ້ເດັກສາມາດພັດທະນາທັງຮ່າງກາຍ, ມັນສະໝອງ ແລະ ຈິດໃຈ ເພື່ອຢູ່ຮ່ວມກັນໃນສັງຄົມໄດ້ຢ່າງເປັນປົກກະຕິ;

3. ເດັກ ແລະ ເຍົາວະຊົນມີສິດ ມີຊື່ ແລະ ສັນຊາດແຕ່ກຳເນີດ;

4. ເດັກ ແລະ ເຍົາວະຊົນຕ້ອງໄດ້ຮັບຄວາມໝັ້ນຄົງທາງສັງຄົມ ແລະ ເຕີບໃຫຍ່ໄດ້ຢ່າງສົມບູນ ດັ່ງນັ້ນ, ທັງແມ່ ແລະ ເດັກ ຄວນໄດ້ຮັບການເບິ່ງແຍງ ແລະ ປົກປ້ອງເປັນພິເສດນັບຕັ້ງແຕ່ຖືພາໄປຈົນເຖິງຫຼັງຈາກໃຫ້ກຳເນີດບຸດແລ້ວ ໂດຍໄດ້ຮັບສິດໃນການໄດ້ຮັບທີ່ຢູ່ອາໄສ, ອາຫານ, ການປິ່ນປົວ ໂດຍສະເພາະເດັກໃນໄວຈະເລີນເຕີບໂຕ;

5. ເດັກ ແລະ ເຍົາວະຊົນ ທີ່ພິການທາງຮ່າງກາຍ, ສະໝອງ ແລະ ຈິດໃຈ ມີສິດໄດ້ຮັບການຮັກສາພິເສດ ໝາຍຄວາມວ່າ ການເບິ່ງແຍງດູແລ ແລະ ການສຶກສາ ຕ້ອງເໝາະສົມກັບສະພາບຂອງເດັກ;

6. ເດັກ ແລະ ເຍົາວະຊົນຕ້ອງໄດ້ຮັບຄວາມຮັກແລະຄວາມເຂົ້າໃຈ ທີ່ຈະຊ່ວຍພັດທະນາບຸກຄະລິກກະພາບ ໂດຍຢູ່ໃນຄວາມຮັບຜິດຊອບຂອງບິດາ ມານດາ ໃນການລ້ຽງດູ ແລະ ໃນທຸກກໍລະນີ ເດັກຕ້ອງຢູ່ໃນບັນຍາກາດທີ່ເຕັມໄປດ້ວຍຄວາມຮັກ, ຄວາມອົບອຸ່ນ, ປອດໄພ ແລະ ບໍ່ພັດພາກຈາກພໍ່ແມ່ ໃນກໍລະນີທີ່ເດັກບໍ່ມີຄອບຄົວ ຫຼື ມາຈາກຄອບຄົວທີ່ທຸກຍາກ ແລະ ມີລູກຫຼາຍຄົນ ກໍຈະໄດ້ຮັບຄວາມຊ່ວຍເຫຼືອເປັນພິເສດຈາກລັດ ແລະ ອົງການອື່ນໆ;

7. ເດັກ ແລະ ເຍົາວະຊົນ ມີສິດທີ່ຈະໄດ້ຮັບການສຶກສາ ເຊິ່ງຄວນຈະໃຫ້ຢູ່ໃນຊັ້ນປະຖົມເປັນຢ່າງຕ່ຳ ເພື່ອເປັນການສົ່ງເສີມວັດທະນະທຳໂດຍທົ່ວໄປ ແລະ ໃຫ້ເດັກໄດ້ເຕີບໃຫຍ່ເປັນບຸກຄົນທີ່ມີປະໂຫຍດຕໍ່ສັງຄົມ; ການສຶກສາໃນລະບົບນີ້ ຄວນຈະລວມໄປເຖິງການແນະແນວທາງຊີວິດ ເຊິ່ງບິດາມານດາ ເປັນຜູ້ຮັບຜິດຊອບທຳອິດ, ເດັກຕ້ອງມີໂອກາດໄດ້ຮັບຄວາມມ່ວນຊື່ນຈາກການຫຼິ້ນ ແລະ ມ່ວນຊື່ນໄປພ້ອມກັນ;

8. ເດັກ ແລະ ເຍົາວະຊົນຈະເປັນບຸກຄົນທຳອິດທີ່ໄດ້ຮັບການຄຸ້ມຄອງແລະສົງເຄາະທຸກກໍລະນີ;

9. ເດັກ ແລະ ເຍົາວະຊົນ ຕ້ອງໄດ້ຮັບການຄຸ້ມຄອງໃຫ້ຫຼຸດພົ້ນຈາກການຖືກຖິ້ມ, ຈາກຄວາມໂຫດຮ້າຍທາລຸນ ແລະ ຈາກການຖືກກົດຂີ່ຂົ່ມເຫັງທຸກຢ່າງ, ເດັກຈະຕ້ອງບໍ່ກາຍເປັນສິນຄ້າ ບໍ່ວ່າໃນຮູບແບບໃດກໍຕາມ, ຈະຕ້ອງບໍ່ມີການນຳໃຊ້ແຮງງານເດັກກ່ອນໄວອັນຄວນ, ບໍ່ມີການກະທຳທີ່ຈະເປັນອັນຊັກຈູງ ຫຼື ອະນຸຍາດໃຫ້ເດັກຕ້ອງຮັບຈ້າງເຮັດວຽກທີ່ກໍ່ໃຫ້ເກີດຜົນຮ້າຍຕໍ່ສຸຂະພາບຂອງເດັກ ຫຼື ເປັນເຫດໃຫ້ການພັດທະນາທາງຮ່າງກາຍ, ສະໝອງ ແລະ ຈິດໃຈຂອງເດັກໄດ້ຮັບຜົນກະທົບ;

10. ເດັກ ແລະ ເຍົາວະຊົນ ຕ້ອງໄດ້ຮັບການຄຸ້ມຄອງໃຫ້ພົ້ນຈາກການກະທຳທີ່ສະແດງໃຫ້ເຫັນເຖິງການຂັດຂວາງ, ແບ່ງແຍກ ບໍ່ວ່າຈະເປັນເຊື້ອຊາດ , ສາສະໜາ ຫຼື ຮູບແບບໃນການເບິ່ງແຍງລ້ຽງດູເດັກໃຫ້ເຕີບໃຫຍ່ ໃນສະພາບແວດລ້ອມທີ່ມີຄວາມເຂົ້າອົກເຂົ້າໃຈ, ຮູ້ໃຫ້ອະໄພເຊິ່ງກັນແລະກັນ, ມີມິດຕະພາບລະຫວ່າງຊົນຊາດຕ່າງໆ, ສັນຕິພາບສາກົນ ດ້ວຍຈິດສຳນຶກກຳລັງແຮງໃນການອຸທິດຕົນຮັບໃຊ້ໃຫ້ແກ່ມວນມະນຸດດ້ວຍກັນ.




## ເຫເວດ

ໃນຄຳສັບທີ່ວ່າ "**ເຫເວດ**" ຈະແປວ່າຝົນ ເນື່ອງຈາກວ່າລະດູຝົນໃກ້ຈະມາຮອດແລ້ວ. ຈຶ່ງນຳເອົາຄຳສັບກ່ຽວກັບຝົນ ມາໃຫ້ທ່ານໄດ້ອ່ານ ຫຼື ສຳພັດກໍລະນີ.

ໃນຄຳສັບທີ່ກ່ຽວຂ້ອງກັບຝົນ ມີຫຼາຍ "ຄຳສັບ ທັງພາສາລາວ. ພາສາບາລີ ແລະ ສັນສະກຣິດ" ດັ່ງຕໍ່ໄປນີ້:

- ເຫເວດ ແປວ່າຝົນ
- ເຫີວ ແປວ່າຝົນ
- ພິລຸນ ແປວ່າຝົນ
- ຊົນລະທາ ແປວ່າຟ້າຝົນ. ນ້ຳ ຫຼື ນ້ຳຕາ
- ສາຍຟ້າ ແສງທີ່ມາບແມບເຫຼື້ອມໃນທ້ອງຟ້າ. ບົ່ງບອກເຖິງຝົນທີ່ມີຟ້າຮ້ອງ ຟ້າຜ່າ
- ຢາດສາຍທາລາ ແປວ່າຝົນຕົກເຫເວດ ເປັນສັບພາສາບາລີ. ພາສາຂອງຄົນອິນເດຍບູຮານ.



ສຸກສະບາຍຫາຍໂລຄ

# ເສັ້ນເລືອດຫົວໃຈຕີບ ສາເຫດຫຼັກຂອງຫົວໃຈຂາດເລືອດ

# ສາວແວ່ນ



ພະຍາດເສັ້ນເລືອດຫົວໃຈຕີບ ຫຼື ໂລກຫຼອດເລືອດຫົວໃຈ ເກີດຈາກການສະສົມຂອງຄໍເລສເຕີຣໍ ແລະ ສານຕ່າງໆ ພາຍໃນເສັ້ນເລືອດ ຈົນກາຍເປັນໄຂມັນ (Plaque) ເກາະຕິດຕາມເສັ້ນເລືອດ ເຮັດໃຫ້ເສັ້ນເລືອດນ້ອຍລົງ ຫຼືການແຕກຫັກຂອງໄຂມັນ ໄປກີດຂວາງການໄຫຼວຽນຂອງເລືອດ ຖ້າປາກົດການນີ້ເກີດຂຶ້ນໃນເສັ້ນເລືອດທີ່ໄປຫຼໍ່ລ້ຽງຫົວໃຈ ການສະໜອງເລືອດໃຫ້ແກ່ຫົວໃຈກໍຈະຫຼຸດລົງ ເຮັດໃຫ້ເກີດອາການກ້າມເນື້ອຫົວໃຈຂາດເລືອດກະທັນຫັນ ເຊິ່ງຖ້າຮ້າຍແຮງ ກໍອາດເຮັດໃຫ້ເສຍຊີວິດໄດ້; ດັ່ງນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມີສາເຫດ ແລະ ອາການຂອງໂລກນີ້ມານຳສະເໜີໃຫ້ແກ່ທ່ານໄດ້ຮັບຮູ້ນຳກັນດັ່ງຕໍ່ໄປນີ້:

**ອາການທີ່ສາມາດພົບເຫັນໄດ້ໃນຄົນເຈັບທີ່ເປັນພະຍາດເສັ້ນເລືອດຕີບ ແລ້ວຫົວໃຈເກີດອາການຫົວໃຈຂາດເລືອດ ໄດ້ແກ່:**

- ຮູ້ສຶກເຈັບໜ້າເອິກຢ່າງຮຸນແຮງ, ແໜ້ນໜ້າເອິກ ຈົນຫາຍໃຈບໍ່ໄດ້ ເຊິ່ງມັກຈະເກີດຢູ່ກາງເອິກ ຫຼື ປວດລາມໄປໜ້າເອິກທາງເບື້ອງຊ້າຍ;
- ອ່ອນເພຍ, ບໍ່ມີແຮງ ແລະ ເມື່ອຍງ່າຍ;
- ບາງຄັ້ງມີອາການໃຈສັ່ນ ແລະ ມີເຫື່ອອອກນຳອີກ;
- ໜ້າມືດ, ເປັນລົມໝົດສະຕິ, ຫົວໃຈຢຸດເຕັ້ນ ແລະ ຖ້າຮຸນແຮງກໍຈະເສຍຊີວິດທັນທີ.

**ສາເຫດ ຫຼື ປັດໄຈສ່ຽງຂອງພະຍາດຫຼອດເລືອດຫົວໃຈຕີບ ແມ່ນມາຈາກຫຼາຍສາເຫດຄື:**

- ອາຍຸຫຼາຍຂຶ້ນ;
- ມີຄໍເລສເຕີຣໍ ແລະ ລະດັບໄຂມັນໃນເລືອດສູງ;
- ເປັນພະຍາດເບົາຫວານ;
- ມີຄວາມດັນເລືອດສູງ;
- ໂລກອ້ວນ;
- ການດື່ມເຫຼົ້າ ແລະ ການສູບຢາ;
- ມີຄວາມຕຶງຄຽດ ຫຼື ດຳລົງຊີວິດພາຍໃຕ້ສະຖານະການຕຶງຄຽດເປັນປະຈຳ;
- ຂາດການອອກກຳລັງກາຍ.



## ຫົກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສາວຈົ້ມ

✳ ***ຊົມເຊີຍ***ວັນ**ເດັກນ້ອຍສາກົນ** ແລະ ວັນ**ປູກຕົ້ນໄມ້ແຫ່ງຊາດ** 1 ມິຖຸນາທີ່ຈະມາເຖິງນີ້ ເຫັນມີຫຼາຍພາກສ່ວນ ຄະແຫລງຂ່າວກ່າວເຖິງການວາງ**ແຜນປູກຕົ້ນໄມ້** ໂດຍເນັ້ນປູກໃຫ້ໄດ້ຫລາຍໆເຂົ້າຕາ ຄັນວ່າແປງປູກແລ້ວ ຫຼິງຫຼ່າບໍ່ລະບັດ **ກໍດີດາຍ** ຢ່າປູກໄປແຊວຊະ ປ່ອຍປະຕາມເລື້ອງ ຕອນປູກເຮືອງຄຶກຄື້ນ ຫຼາຍຊຸມຄົນຈົບອື່ງ ຫຼັງໆໄປຢ່າໄດ້ ປະໃຫ້ຫຍ້າຍຸງ ຮົກລຸງລັງໃຫຍ່ຖ້ອມ ພັນພືດຝັງດິນ ຢ່າປ່ອຍປະຝູງສັດ ເລາະກິນກັດແຫ້ນ ວາງແຜນປູກ ກໍໃຫ້ວາງແຜນລ້ອມ ຫຼັກຮາວຮົ້ວກ່າຍ ບໍລະບັດພ່າພ້ອມ ປີຕໍ່ໄປຈຶ່ງບໍ່ຄືນຕ່າວໂຕ້ງ ປູກຊຸມເຄົ້າບ່ອນເດີມ **ທ່ານເອີຍ!.**

✳ ໄລຍະຕ້ອນຮັບ**ວັນທີ 1 ມິຖຸນາ** ກໍຍັງຈະສືບຕໍ່ເວົ້າເຖິງເດັກ ເພາະ **"ເດັກນ້ອຍໃນວັນນີ້ ຄືຜູ້ໃຫຍ່ໃນວັນໜ້າ" "ເດັກຄືອະນາຄົດຂອງຊາດ" "ເດັກສະຫຼາດ ພາຊາດຈະເລີນ"** ແຕ່ດັ່ງທີ່ເຮົາຮັບຮູ້ນຳກັນແລ້ວວ່າ **ຢາສູບ** ເປັນສິນຄ້າເສບຕິດທີ່ຖືກກົດໝາຍ ແຕ່ເຮັດໃຫ້ຜູ້ບໍລິໂພກ ເປັນພະຍາດຮ້າຍແຮງພິການ ແລະ ເສຍຊີວິດກ່ອນໄວອັນຄວນ ໂດຍສະເພາະ **"ຢາສູບໄຟຟ້າ ກຳລັງເບື່ອເມົາ ຜູ້ທີ່ຈະເປັນອະນາຄົດຂອງຊາດ".**

## ອາດ ກະວີລາວ

# ຊ່ວຍກັນປູກປ່າ

**# ໂດຍ: ສຸກສະຫວັນ ພົມມະວົງ**

✳ ຮຽນຍັງຈຳຈື່ໄດ້
ສາວຄູສອນ-
ກຽມຄວາມພ້ອມ
ອອກແຮງງານຮ່ວມຫ້ອງ

ຄາວກ່ອນຕອນຮຽນ
ສັ່ງມາຂຽນໄວ້
ວານຫາມວນໝູ່
ກຽມພ້ອມຮັບມື

✳ ຄູບອກວັນເດັກນ້ອຍ
ຢາຍຄົນຊຸມ
ຕອນນີ້ຄຳນຶງພໍ້
ມະໂນພາບຕ່ອຍຕ້ອງ

ກຽມປູກພຶກສາ
ປູກກັນຄົນຕົ້ນ
ຄຳຄູສອນກ່າວ
ເຫັນໄດ້ຄ່າຄຸນ

✳ ພໍແຕ່ມາຮອດບ້ານ
ຍຸງຍາງແດງ
ສີຂຽວເຂັ້ມ
ຫາກເມື່ອມັນໃຫຍ່ຂຶ້ນ

ຫາໜໍ່ແນວພັນ
ປູກຝັງດິນໄວ້
ເຕັມມືພຽນປູກ
ຢືນຕົ້ນຮົ່ມເຢັນ

✳ ລົງມືປຸນປູກເບ້ຍ
ແຍງລຳໃບ
ເປັນແນວລ້ອມ
ແປງປ່ຽນໂລກເຮັ່ງຮ້ອນ

ວັນຜ່ານຫຼາຍປີ
ໃຫຍ່ກາຍຫົວພົ້ນ
ປັບຈູນອາກາດ
ຄືນໃຫ້ຊຸ່ມເຢັນ

✳ ໃຫຍ່ຂຶ້ນຮຽນຈຶ່ງຮູ້
ແຕ່ວ່າຫຼາຍຄົນຕັດ
ຈຶ່ງໄດ້ມາຂໍຮ້ອງ
ຊ່ວນປູກຢຸດໂຄ່ນໄມ້

ຫາກປູກຢູ່ຄົນດຽວ
ແບ່ງປັນນຳໃຊ້
ຫາຄົນໂຮມຮ່ວມ
ຮັກສາໄວ້ຊ່ວຍກັນ ທ່ານເອີຍ!




## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ວຽກບ້ານ

ຮອດວັນຈັນ ນາງນ້ອຍໄປໂຮງຮຽນປົກກະຕິ ພໍແຕ່ເຫັນໜ້າ ເອື້ອຍຄູກໍຖາມທັນທີວ່າ:

**ເອື້ອຍຄູ:** ວັນເສົາ ອາທິດ ຫຼານໄປທ່ຽວໃສແດ່ ນ້ອງບໍ່?

**ນາງນ້ອຍ:** ບໍ່ໄດ້ໄປໃສເດ ຄາຕາຍແຕ່ເຮັດວຽກບ້ານຜີບ້າ ທີ່ເອື້ອຍຄູໃຫ້ນີ້ລະ.

**ເອື້ອຍຄູ:** ???



## ຄະຕິເຕືອນໃຈ

# ດອກຫຍ້າ

ຢ່າຊູໄລລາຄຶ້ມ ພົງພັນພີ່ນ້ອງເກົ່າ
ຢ່າຊູລະເຜົ່າເຊື້ອ ໄປຫຼົງຍ້ອງຜູ້ອື່ນດີ




# ດິດອກ - ໄປ

"ດິດອກ" ແລະ "ໄປ" ເປັນຄຳລາວເດີມທີ່ບໍ່ເຫັນສູ້ໃຊ້ໃນປັດຈຸບັນ. ທັງສອງຄຳນີ້ມີຄວາມໝາຍ ແລະການໃຊ້ຕ່າງກັນດັ່ງນີ້:

"ດິດອກ" "ເປັນຄຳວິເສດ ໝາຍເຖິງ ຊື່ໆ, ລ້າໆ, ບໍ່ມີຫຍັງ" ເຊັ່ນ :

- ກິນເຂົ້າດິດອກ ກໍໝາຍເຖິງ ກິນເຂົ້າບໍ່ມີຫຍັງກັບ, ກິນເຂົ້າລ້າໆ

"ດິດອກ" "ບາງທ້ອງຖິ່ນກໍໃຊ້ຄຳວ່າ ດາຍດອກ" ເຊັ່ນ

- ເປັນທິດເປັນຈານດາຍດອກ ຄວາມຮູ້ຄວາມຫຼັກບໍ່ມີຫຍັງ.

"ໄປ" ເປັນຄຳວິເສດ ໝາຍເຖິງ ບໍ່ ດັ່ງ ໄປ່ມີ ກໍໝາຍເຖິງ ບໍ່ມີ ຕົວຢ່າງໃນເລື່ອງສັງສິນໄຊ ມີເຟື້ອງໜຶ່ງໄດ້ກ່າວວ່າ:

- ທ່ໍໄປ່ມີເຜົ່າເຊື້ອ.................ພະເຍຍຍອດເທວີເປັນພະຍາໂທນ.................ຢູ່ເມືານອນແລ້ງ

**# ຂໍ້ສັງເກດ:** ຄຳວ່າ "ດິດອກ" ຍັງປາກົດເຫັນໃຊ້ຢູ່ໃນບາງທ້ອງຖິ່ນທາງພາກກາງແລະພາກໃຕ້, ສ່ວນຄຳວ່າ ໄປ່ ເຫັນໃຊ້ໃນການຂຽນກາບກອນ, ສ່ວນໃນພາສາປາກເວົ້າປະຈຳວັນຍັງປາກົດໃນພາສາລາວບາງທ້ອງຖິ່ນໃນລາວ ແລະ ບາງທ້ອງຖິ່ນໃນພາກອີສານໄທ.




ໃນຖານະຜູ້ມີຈິດໃຈຕິດພັນຄຳສອນບູຮານ ຂໍຝາກໃຫ້ທຸກຄົນ ໂດຍສະເພາະຄົນໜຸ່ມຫຼົງ ຫັນມາສົນໃຈສຶກສາປະຫວັດສາດ, ສິລະປະວັດທະນະທຳພື້ນບ້ານ ແລະ ພູມປັນຍາທ້ອງຖິ່ນຂອງເຮົາ ມີຄວາມເປັນມາແນວໃດ ແລະ ພວກເພິ່ນຖ່າຍທອດສູ່ຄົນຮຸ່ນຕໍ່ໆໄດ້ຄືແນວໃດ.







# ອາກຊັງຕິນ ກຽມຊຳລະຄ່າສິນຄ້ານຳເຂົ້າຈາກຈີນດ້ວຍເງິນຢວນ



ອີງຕາມການລາຍງານຂ່າວເມື່ອທ້າຍເດືອນເມສາຜ່ານມາ ໃຫ້ຮູ້ວ່າ: ລັດຖະບານອາກຊັງຕິນ ກຽມເລີ່ມຊຳລະຄ່າສິນຄ້ານຳເຂົ້າຈາກປະເທດຈີນດ້ວຍສະກຸນເງິນຢວນແທນສະກຸນເງິນໂດລາຂອງອາເມລິກາ ເພື່ອຫວັງຊ່ວຍປະຢັດເງິນສະກຸນໂດລາໃນສາງເງິນສຳຮອງລະຫວ່າງປະເທດທີ່ກຳລັງຫຼຸດລົງຢ່າງຕໍ່ເນື່ອງ.

ອາກຊັງຕິນພາຍໃຕ້ການນຳຂອງທ່ານ ອັລແບຣໂຕ ເຟຣນັນເດຊ ປະທານາທິບໍດີອາກຊັງຕິນ ໄດ້ຕັ້ງເປົ້າພາຍໃນເດືອນເມສານີ້ ຈະຊຳລະຄ່າສິນຄ້ານຳເຂົ້າຈາກຈີນມູນຄ່າປະມານ 1.000 ລ້ານໂດລາ ໃນຮູບແບບຂອງເງິນຢວນ.

ທ່ານ ແຊຈິໂອ ມັສຊາ ລັດຖະມົນຕີດ້ານເສດຖະກິດຂອງອາກຊັງຕິນ ລະບຸວ່າ: ການຕັດສິນໃຈປ່ຽນແປງສະກຸນເງິນທີ່ໃຊ້ໃນການຊຳລະຄ່າສິນຄ້າ ແລະ ບໍລິການທີ່ນຳເຂົ້າຈາກປະເທດຈີນນັ້ນ ເປັນໄປເພື່ອຫຼຸດການໄຫຼອອກຂອງເງິນສະກຸນໂດລາພາຍໃນປະທດ.

ໂດຍອາກຊັງຕິນເປັນໜຶ່ງໃນປະເທດທີ່ກຳລັງປະເຊີນກັບສະພາບການຮັກສາສະກຸນເງິນໂດລາໃນສາງເງິນສຳຮອງລະຫວ່າງປະເທດ ທ່າມກາງສະພາບອັດຕາການສົ່ງອອກຜົນຜະລິດທາງກະສິກຳຕົກຕ່ຳລົງ ເນື່ອງຈາກສະພາບແຫ້ງແລ້ງຮຸນແຮງບວກກັບສະຖານະການຄວາມບໍ່ແນ່ນອນທາງການເມືອງກ່ອນຈະມີການເລືອກຕັ້ງທົ່ວໄປໃນທ້າຍປີ 2023 ນີ້.

ນອກຈາກນີ້, ໃນເດືອນພະຈິກຜ່ານມາ ລັດຖະບານອາກຊັງຕິນຫາກໍເພີ່ມວົງເງິນນຳທາງການຈີນ ມູນຄ່າກວ່າ 5 ພັນລ້ານໂດລາ ເພື່ອສົ່ງເສີມຄວາມແຂງແຮງໃຫ້ເງິນສຳຮອງລະຫວ່າງປະເທດຂອງຕົນ ໂດຍຂໍ້ຕົກລົງດັ່ງກ່າວຈະເປີດໂອກາດໃຫ້ອາກຊັງຕິນ ສາມາດເລັ່ງການນຳເຂົ້າສິນຄ້າຈາກຈີນໄດ້ຫຼາຍຂຶ້ນ ໂດຍແລກປ່ຽນກັບເງື່ອນໄຂທີ່ວ່າ: ຄຳສັ່ງຊື້ສິນຄ້າທີ່ໄລ່ລາຄາເປັນເງິນຢວນຈະຕ້ອງມີການອະນຸມັດໃຫ້ນຳເຂົ້າໃນອາກຊັງຕິນໄດ້ພາຍໃນ 90 ວັນ ແທນທີ່ຈະເປັນ 180 ວັນຕາມປົກກະຕິ.

ອາກຊັງຕິນບໍ່ແມ່ນປະເທດທຳອິດໃນເຂດອາເມລິກາລາຕິນທີ່ຕັດສິນໃຈປ່ຽນສະກຸນເງິນທີ່ໃຊ້ຈ່າຍກັບທາງການຈີນມາເປັນສະກຸນເງິນຢວນ, ກ່ອນໜ້ານີ້ລັດຖະບານບຣາຊິວ ກໍໄດ້ເຫັນດີຕໍ່ແນວທາງດັ່ງກ່າວນັບແຕ່ເດືອນກຸມພາຜ່ານມາ.

# ບຣາຊິວ ກຽມອອກພັນທະບັດສີຂຽວ ເພື່ອລະດົມທຶນພັດທະນາໂຄງການດ້ານສິ່ງແວດລ້ອມ



ມີການລາຍງານຂ່າວໃຫ້ຮູ້ວ່າ: ລັດຖະບານບຣາຊິວ ໄດ້ຈັດຕັ້ງຄະນະກຳມະການລະຫວ່າງກະຊວງຂຶ້ນໃນວັນທີ 17 ພຶດສະພາຜ່ານມາ ເພື່ອພັດທະນາແຜນງານການອອກພັນທະບັດອະທິປະໄຕເພື່ອຄວາມຍືນ (Sustainable Sovereign Bonds) ຫຼື ພັນທະບັດສີຂຽວ ໃນທ້າຍປີ 2023.

ພາກລັດຂອງບຣາຊິວ ຊີ້ແຈງວ່າ: ພັນທະບັດໃໝ່ເຫຼົ່ານີ້ ຈະເປັນຕາສານໜີ້ສາທາລະນະທີ່ໄດ້ຮັບການສະໜັບສະໜູນຈາກການຈັດສັນງົບປະມານຂອງລັດຖະບານກາງບຣາຊິວ ເພື່ອການພັດທະນາທີ່ຍືນຍົງລວມທັງໃຊ້ໃນການດຳເນີນໂຄງການຕ່າງໆດ້ານສິ່ງແວດລ້ອມ ແລະ ສັງຄົມ ໂດຍຄາດວ່າຈະສາມາດລະດົມທຶນໄດ້ 2 ພັນລ້ານໂດລາ.

ບຣາຊິວ ມີເປົ້າໝາຍໃຊ້ພັນທະບັດສີຂຽວນີ້ສ້າງຄວາມເຊື່ອໝັ້ນໃຫ້ບັນດານັກລົງທຶນ ຫຼັງຈາກທ່ານ ລູອິຊ ອິນາຊີໂອ ລູລາ ດາ ຊິລວາ ປະທານາທິບໍດີບຣາຊິວ ພະຍາຍາມຊຸກຍູ້ໃຫ້ບຣາຊິວເປັນຜູ້ນຳດ້ານສິ່ງແວດລ້ອມໃນປະຊາຄົມໂລກ.

ປັດຈຸບັນການອອກຕາສານໜີ້ດ້ານຄວາມຍືນຍົງເປັນໜຶ່ງໃນແຫຼ່ງລະດົມທຶນທີ່ໄດ້ຮັບຄວາມສົນໃຈຫຼາຍ ຫຼັງຈາກພາກລັດ ແລະ ພາກເອກະຊົນໃນຫຼາຍປະເທດທົ່ວໂລກຕ່າງເນັ້ນໜັກເຖິງບັນຫາດ້ານສິ່ງແວດລ້ອມ ແລະ ການປ່ຽນແປງຂອງສະພາບອາກາດ ຈຶ່ງມຸ້ງຫາວິທີແກ້ໄຂ ແລະ ຮັບມືຕໍ່ບັນຫາເຫຼົ່ານີ້ຢ່າງຈິງຈັງ ແລະ ເພື່ອຈະບັນລຸເປົ້າໝາຍຕ່າງໆທີ່ໄດ້ຕັ້ງໄວ້ນັ້ນ ຈຳເປັນຕ້ອງໃຊ້ເງິນທຶນຈຳນວນຫຼາຍ ຈຶ່ງນຳໄປສູ່ແນວທາງຕ່າງໆໃນການເປີດລະດົມທຶນ.

# ຮອງປະທານສະພາປະຊາຊົນອາຟຣິກາໃຕ້ ເຫັນວ່າການຄ້າສາກົນຄວນທັບມ້າງຮູບແບບເກົ່າ



ອີງຕາມການລາຍງານຂ່າວເມື່ອບໍ່ດົນມານີ້, ທ່ານ ເລເຊຊາ ເຊໂນລີ ຮອງປະທານສະພາປະຊາຊົນອາຟຣິກາໃຕ້ ໄດ້ກ່າວວ່າ: ການກະທຳຂອງອາເມຣິກາທີ່ນຳໃຊ້ເຈົ້າອຳນາດເງິນໂດລາ ເພື່ອກົດດັນປະເທດອື່ນນັ້ນແມ່ນບໍ່ສາມາດເຫັນດີນຳໄດ້, ການຄ້າສາກົນຄວນທັບມ້າງຮູບແບບເກົ່າຂອງເຈົ້າອຳນາດສະກຸນເງິນດຽວ, ສະແຫວງຫາຮູບແບບການຄ້າທີ່ຍຸຕິທຳໂດຍປາສະຈາກເງິນໂດລາ.

ທ່ານ ເຊໂນລີ ເຫັນວ່າ: ໃນໄລຍະຜ່ານມາໜຶ່ງປີກວ່ານີ້ເປັນຕົ້ນມາ, ທະນາຄານກາງຂອງອາເມລິກາໄດ້ເພີ່ມອັດຕາດອກເບ້ຍຈຳນວນຫຼາຍຢ່າງບໍ່ຢຸດຢັ້ງ, ພາໃຫ້ເງິນທຶນຂອງອົງກອນເສດຖະກິດທີ່ຈະເລີນໃໝ່ຫຼັ່ງໄຫຼໄປສູ່ອາເມລິກາ, ສິ່ງນີ້ໄດ້ກະທົບເຖິງອົງກອນເສດຖະກິດທີ່ຈະເລີນໃໝ່ຢູ່ໃນທົ່ວໂລກ. ທ່ານຊີ້ໃຫ້ເຫັນວ່າ: ການກະທຳຂອງອາເມລິກາທີ່ນຳໃຊ້ເຈົ້າອຳນາດເງິນໂດລາເພື່ອກົດດັນປະເທດອື່ນນັ້ນແມ່ນບໍ່ສາມາດເຫັນດີນຳໄດ້.

ທ່ານກ່າວຕື່ມວ່າ: ອາເມລິການຳໃຊ້ຖານະເຈົ້າອຳນາດຂອງຕົນໃນການຊຳລະສະສາງສາກົນ ແລະ ພື້ນຖານໂຄງລ່າງດ້ານການທະນາຄານ, ປຸ້ນເອົາຜົນການພັດທະນາເສດຖະກິດຂອງປະເທດອື່ນ, ພິມພັນທະບັດແຫ່ງລັດຈຳນວນຫຼວງຫຼາຍ, ຫັນຍ້າຍຄວາມສ່ຽງຂອງຕົນໃນເວລາເກີດວິກິດການ, ຜ່ານການກະທຳເຈົ້າອຳນາດເພື່ອບັງຄັບທົ່ວໂລກຈ່າຍໃຫ້ກັບການກະທຳທີ່ບໍ່ມີຄວາມຮັບຜິດຊອບຂອງອາເມລິກາ. ສະນັ້ນ, ການຄ້າສາກົນຈຶ່ງມີຄວາມຈຳເປັນເພື່ອສະແຫວງຫາຮູບແບບການຄ້າຊະນິດໜຶ່ງທີ່ປາສະຈາກເງິນໂດລາ. ທ່ານຊີ້ໃຫ້ເຫັນວ່າ: ການແລກປ່ຽນເງິນຕາ ແລະ ການຄ້າຂາຍດ້ວຍສະກຸນເງິນປະເທດຕົນຄວນກາຍເປັນທາງເລືອກກ່ອນໝູ່ໃນການຄ້າຂາຍ.

ເຮົາໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ສາລະພັດວິທີ ເພື່ອຫຼຸດຜ່ອນຜົນຮ້າຍຈາກຢາສູບ

ວັນທີ 31 ເດືອນ ພຶດສະພາຂອງທຸກໆປີ ແມ່ນວັນສາກົນເພື່ອ “ໂລກປອດຢາສູບ” ເຊິ່ງພາສາອັງກິດຂຽນວ່າ No Tabacco Day, ແຕ່ໃນພາສາລາວນັ້ນ ພວກເຮົາເວົ້າຫຼາຍແບບ ເຊັ່ນ: “ວັນຕ້ານຢາສູບ”, “ວັນຢຸດສູບຢາ”, “ວັນຫ້າມສູບຢາ” ດັ່ງນີ້ເປັນຕົ້ນ, ແຕ່ຈະເອີ້ນແນວໃດກໍແລ້ວແຕ່, ເພາະຈຸດປະສົງນັ້ນມີໜຶ່ງດຽວ ຄືເປັນວັນສາກົນເພື່ອທົບທວນຄືນຜົນຮ້າຍຂອງຢາສູບ ທີ່ສົ່ງຜົນກະທົບຕໍ່ສຸຂະພາບຂອງຄົນເຮົາ, ເມື່ອຄົນເຮົາເສຍສຸຂະພາບ ແນ່ນອນມັນກໍລາມໄປສູ່ຜົນຮ້າຍທາງເສດຖະກິດແລະສັງຄົມຢ່າງຫຼີກລ່ຽງບໍ່ໄດ້. ໃນບັນຍາກາດປົ່ນອ້ອມວັນທີ 31 ພຶດສະພາຂອງທຸກໆປີນັ້ນ, ປະເທດຕ່າງໆ ພາກັນທວນຄືນມາດຕະການທາງກົດໝາຍ ກໍຄືລະບຽບການຕ່າງໆທີ່ມີເພື່ອຄວບຄຸມຜົນຮ້າຍຈາກຢາສູບ, ພ້ອມທັງສ້າງຂະບວນການປຸກລະດົມຄວາມຮັບຮູ້ຂອງທົ່ວສັງຄົມ ກ່ຽວກັບຄວາມອັນຕະລາຍຈາກ ທາດນິໂກຕິນ ທີ່ກະທົບຕໍ່ສຸຂະພາບຂອງຄົນເຮົາ ໂດຍສະເພາະແມ່ນບຸກຄົນໃນເກນອາຍຸເຍົາໄວ. ມາດຕະການຄວບຄຸມຢາສູບທີ່ເປັນເປົ້າໝາຍຍົກຂຶ້ນມາທົບທວນຕີລາຄາຄືນໃນວັນດັ່ງກ່າວ ( 31 ພຶດສະພາ) ນັ້ນ ລວມມີ: ການປະຕິບັດກົດໝາຍວ່າດ້ວຍການຄວບຄຸມຢາສູບ ໂດຍລົງເລິກມາດຕະການຫ້າມໂຄສະນາຢາສູບ, ການຜະລິດ, ການຈຳໜ່າຍຢາສູບ, ສະຖານທີ່ຫ້າມສູບຢາ, ການຕິດປ້າຍຫ້າມສູບຢາ, ການປັບຂຶ້ນພາສີຢາສູບ; ບັນຫາຢາສູບໄຟຟ້າ, ການກຳນົດອາຍຸຂອງຜູ້ທີ່ສາມາດຊື້ຢາສູບ, ຂໍ້ກຳນົດວ່າດ້ວຍການພິມຮູບກ່ຽວກັບຜົນຮ້າຍຂອງຢາສູບໃສ່ຊອງຢາສູບ, ການກຳນົດເຂດສຳລັບຜູ້ສູບຢາ. ຢູ່ບາງປະເທດເຊັ່ນ **ອິນເດຍ** ນັ້ນ ໄດ້ມີຂໍ້ຫ້າມຂາຍຢາສູບເປັນກອກ ເພາະວ່າການຂາຍຢາເປັນກອກນັ້ນ ຈະເປັນການອ່ອຍໃຫ້ຊາວໜຸ່ມເຂົ້າເຖິງຢາສູບໄດ້ງ່າຍຂຶ້ນ (ເພາະບໍ່ໄດ້ຈ່າຍແພງຄືຊື້ຢາສູບເປັນຊອງ) **ຢູ່ປະເທດຈີນ**, ບ່ອນທີ່ມີຄົນສູບຢາປະມານ 300 ລ້ານຄົນນັ້ນ, ທາງການໄດ້ກຳນົດຫ້າມບໍລິສັດຢາສູບ ຫຼືຮ້ານຈຳໜ່າຍຢາສູບ ປະກອບສ່ວນດ້ານການເງິນເພື່ອສະໜັບສະໜູນວຽກກິລາ ກໍຄືງານກຸສົນຕ່າງໆ ເພາະຖືວ່າເປັນເງິນ “ໄຖ່ບາບ” ຫຼື ເປັນການໂຄສະນາຢາສູບໄປໃນຕົວ. **ຢູ່ປະເທດຟີລິບປິນ**ນັ້ນ, ທາງການໄດ້ເອົາໃຈໃສ່ບໍ່ໃຫ້ຢາສູບ ແລະ ຢາເສບຕິດສາມາດເຂົ້າເຖິງໂຮງຮຽນໄດ້ຢ່າງເດັດຂາດ ເພາະວ່າໃນປັດຈຸບັນນີ້ ເປົ້າໝາຍຕົ້ນຕໍຂອງກຸ່ມຄ້າຢາເສບຕິດ ແລະ ຢາສູບນັ້ນ ກໍຄືເດັກເຍົາວະຊົນຕາມໂຮງຮຽນທີ່ຍັງໄຮ້ດຽງສາ, ຂາດການຊີ້ຊາກ່ຽວກັບຜົນຮ້າຍຂອງສິ່ງເສບຕິດດັ່ງກ່າວ. ຢູ່ **ສິງກະໂປ**, ຂໍ້ຄວາມໃນປ້າຍຫ້າມສູບຢານັ້ນມີເນື້ອໃນເຄັ່ງຂຶມວ່າ “ສູບຢາແມ່ນຜິດກົດໝາຍ” ບໍ່ໃຊ້ຄຳວ່າ “ຂອບໃຈທີ່ທ່ານບໍ່ສູບຢາ” ຫຼື “ຫ້າມສູບຢາ” ລ້າໆ ຄືຢູ່ຫຼາຍປະເທດລວມທັງຢູ່ລາວພວກເຮົາ. ຢູ່ປະເທດ **ກຳປູເຈຍ**, ການໂຄສະນາເພື່ອຫຼຸດຜ່ອນຢາສູບນັ້ນ ເນັ້ນເປົ້າໝາຍຄົນໃນເກນເຍົາໄວເປັນຕົ້ນຕໍ ໂດຍໄດ້ມີການຈັດຂະບວນການທີ່ຊ່ວຍໃຫ້ຄົນໃນໄວນີ້ເຫັນຜົນຮ້າຍຈາກຢາສູບຢ່າງແທ້ຈິງ ເຊັ່ນ ຂະບວນການອະນາໄມກົດກອກຢາ-ຊອງຢາສູບທີ່ຖິ້ມຊະຕາມແຄມທະເລ ຫຼື ຕາມແຄມຖະໜົນ. ຂ່າວບອກວ່າການເຄື່ອນໄຫວຕົວຈິງແບບນີ້ ເຮັດໃຫ້ຈຳນວນຊາວໜຸ່ມທີ່ເລີ່ມສູບຢານັ້ນຫຼຸດລົງ. ໃນປີ 2014, ຄົນໃນກຳປູເຈຍ ເກນໄວໜຸ່ມທີ່ສູບຢານັ້ນມີສູງເຖິງ 17% ແຕ່ໄດ້ຫຼຸດລົງມາເຫຼືອພຽງ 13% ໃນປີ 2021. **ຢູ່ປະເທດນິວຊີແລນ**, ທາງການໄດ້ເຮັດການສຳຫຼວດ ເລື່ອງຄົນຕິດຢາສູບ ແລະ ພົບວ່າ 4 ໃນ 5 ຄົນທີ່ຕິດຢາສູບນັ້ນ ໄດ້ເລີ່ມສູບຢາ ມາກ່ອນອາຍຸ 18 ປີ. ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າ ຜູ້ທີ່ເລີ່ມສູບຢາແຕ່ຍາມຍັງນ້ອຍນັ້ນ ຈະກາຍເປັນຄົນຂີ້ຢາຕະຫຼອດໄປ. ນິວຊີແລນມີແຜນສ້າງກົດໝາຍ ຫ້າມຄົນອາຍຸ 14 ປີ ຫຼື ຕໍ່າກວ່າ 14 ປີ ສູບຢາຕະຫຼອດຊີວິດ. ກົດໝາຍທີ່ວ່ານັ້ນ ຈະປະກາດໃຊ້ໃນປີ 2027. ເປັນອັນວ່າ ເລີ່ມແຕ່ປີ 2027, ບຸກຄົນທີ່ມີອາຍຸ 14 ປີ ຫຼື ຕໍ່າກວ່າ 14 ປີ ໃນເວລານັ້ນ ຈະຖືກຫ້າມສູບຢາຕະຫຼອດຊີວິດ ພາຍໃຕ້ກົດໝາຍສະບັບນີ້. ສະຖິຕິໃນປີ 2021 ບອກວ່າໃນແຕ່ລະປີ ຄົນນິວຊີແລນ ໂດຍສະເລ່ຍ 5000 ຄົນ ເສຍຊີວິດຍ້ອນພະຍາດທີ່ເກີດມາຈາກຢາສູບ.




# ໒ + ໑ = ໔

#ບ່າວກະບື

"ເອົາ... ກີເອີຍ ສອງບວກໜຶ່ງ ເປັນເທົ່າໃດ?" ອາຍຄູຖາມ.

"ຂ້ານ້ອຍບໍ່ຮູ້ດອກ ທ່ານ".

"ເອົາລັ່ງຊີ້ສະ, ສົມມຸດວ່າ ອາຍຄູມອບໝາສອງໂຕໃຫ້ນ້ອງ, ຈາກນັ້ນໃຫ້ຕື່ມອີກໂຕໜຶ່ງ ຖາມວ່າບັດນີ້ນ້ອງມີໝາຈັກໂຕ?".

"ສີ່ໂຕ" ກີຕອບແບບອາຍໆ.

"ເພາະວ່າ ນ້ອງມີໝາຢູ່ເຮືອນແລ້ວໂຕໜຶ່ງ".

# 2 + 1 = 4

#BAOKBU

"Well, Ky how much is two plus one ? " asked the teacher.

" I don't know, sir" answered Ky.

"Well... fancy I give you two dogs and then one dog more. How many dogs have you now?"

"Four dogs" answered Ky timidly "

"Why, Ky? "

"Because I have one dog already at home. "

ອ່ານມ່ວນ ຊວນຍິ້ມ




ເຊົາສູບຢາຊີວິດຈະຜາສຸກ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ :
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

ຄະນະບັນນາທິການ :
ທ່ານ ປອ. ພຶດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປລຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ :
ນາງ ກິ່ງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ :
ນາງ ນິດຕາ ຄຸນປາກດີ